ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານໃນການທົບທວນຄືນເອກະສານລາຍງານການເງິນຂອງໄລຍະຫົກເດືອນຕົ້ນປີ	4
ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດສຳລັບໄລຍະຫົກເດືອນຕົ້ນປີ	5
ໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ	6
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ	7
ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ	8
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ	9 – 33

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 1169/ຈຫວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງລ່າສຸດ ເລກທີ 1084/ຈຫວ ລົງວັນທີ 26 ພຶດສະພາ 2022 ເຊິ່ງອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າແຫ່ງ ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	
ທ່ານ ເຮີ ຈຸ້ນ	ປະທານ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ຫວັ່ງ ເຫວີຍຄຸນ	ປະທານ	ລາອອກວັນທີ 29 ພຶດສະພາ 2022
ທ່ານ ນາງ ອໍລະໄທ ສັນຕິຄົງຄາ	ຮອງປະທານ	
ທ່ານ ຫຼີ ສ່ຽວຕົ໋ງ	ສະມາຊິກ	ລາອອກວັນທີ 29 ພຶດສະພາ 2022
ທ່ານ ຫວັ່ງ ເຫວີຍຄຸນ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ບຸລະພາ ສັນຕິຄົງຄາ	ສະມາຊິກ	
ທ່ານ ອຸ ຊິ໋ງຫົວ	ສະມາຊິກ	
ທ່ານ ຊຸນ ເຝີ່ຍ ຫງ	ສະມາຊິກ	
ທ່ານ ໂຫ້ວ ສ່ຽວຕົ໋ງ	ສະມາຊິກ	
ທ່ານ ສ່ຽວ ໂຢ່ງ	ສະມາຊິກ	
ທ່ານ ຈາງ ທຽນອີ໋	ສະມາຊິກ	
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	
ທ່ານ ຈໍລິ໋ງ ບົວສີເນ້ັ່ງມາ	ສະມາຊິກ	

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	
ທ່ານ ຫວັ່ງ ເຫວີຍຄຸນ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ຫຼີ ສ່ຽວຕົ໋ງ	ຜູ້ອຳນວຍການໃຫຍ່	ລາອອກວັນທີ 29 ພຶດສະພາ 2022
ທ່ານ ອຸ ຊິ໋ງຫົວ	ຜູ້ອຳນວຍຝ່າຍປະຕິບັດງານ	
ທ່ານ ໂຫ້ວ ສ່ຽວຕົ໋ງ	ຜູ້ອຳນວຍການຝ່າຍການເງິນ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ຊຸນ ເຝີ່ຍ ຫງ	ຜູ້ອຳນວຍການຝ່າຍການເງິນ	ລາອອກວັນທີ 29 ພຶດສະພາ 2022

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນໄລຍະ ແລະ ນະມື້ອອກເອກະສານລາຍງານສະບັບນີ້ ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	
ທ່ານ ເຮີ ຈຸ້ນ	ປະທານ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ໂຫ້ວ ສ່ຽວຕົ້ງ	ປະທານ	ລາອອກວັນທີ 29 ພຶດສະພາ 2022
ທ່ານ ຈາງ ທຽນອີ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022
ທ່ານ ຈໍ່ສິ່ງ ບິວສີເນ້ັ່ງມາ	ສະມາຊິກ	ລາອອກວັນທີ 29 ພຶດສະພາ 2022
ທ່ານ ວຽງສະຫວັນ ພັນທະລີ	ສະມາຊິກ	ແຕ່ງຕັ້ງວັນທີ 29 ພຶດສະພາ 2022

ຜູ້ຕາງໜ້າທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດສຳລັບໄລຍະແຕ່ວັນທີ 1 ມັງກອນ 2022 ຫາວັນທີ 29 ພຶດສະພາ 2022 ແມ່ນ ທ່ານ ຫວັ່ງ ເຫວີຍຄຸນ - ປະທານ ແລະ ສຳລັບໄລຍະແຕ່ວັນທີ 29 ພຶດສະພາ 2022 ຮອດມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ເຮີ ຈຸ້ນ - ປະທານ.

ທ່ານ ຫວັ່ງ ເຫວີຍຄຸນ ໄດ້ຮັບອະນຸຍາດເຊັ້ນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2022 ໂດຍອີງຕາມໃບອະນຸຍາດລົງວັນທີ 1 ພະຈິກ 2017.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ່ງ ລາວ ຈຳກັດ.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີສະເໜີບົດລາຍງານ ແລະ ເອກະສານລາຍງານທາງການເງິນຂອງບໍລິສັດສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ

ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີໃຫ້ມີຄວາມຖືກຕ້ອງ ແລະ ຍຸດຕິທຳຂອງໃບລາຍງານຖານະການເງິນຂອງບໍລິສັດສຳລັບໄລຍະຫົກເດືອນຕົ້ນປີ ແລະ ຜົນຂອງການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ, ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານຂອງບໍລິສັດຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົານັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ມີການພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່ານັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ຫາກມີການເປີດເຜີຍຂໍ້ມູນທີ່ສຳຄັນ ແລະ ໄດ້ອະທິບາຍໃນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ; ແລະ
- ກະກຽມເອກະສານລາຍງານການເງິນ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງບໍລິສັດຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້ຢູ່. ຄະນະບໍລິຫານຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂໍຢັ້ງຢືນວ່າ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີທີ່ກ່ຽວຂ້ອງ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີແມ່ນໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນໄລຍະຫົກເດືອນຕົ້ນປີ.

ຕາງໜ້າຄະນະບໍລິຫານ:

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 12819416/66796572

ບົດລາຍງານໃນການທົບທວນຄືນເອກະສານລາຍງານການເງິນຂອງໄລຍະຫົກເດືອນຕົ້ນປີ

ເຖິງ: ຂາຄຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ"), ນະວັນທີ 30 ມິຖຸນາ 2022 ແລະ ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດອື່ນໆສຳລັບໄລຍະຫົກເດືອນຕົ້ນປີ , ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບໄລຍະຫົກເດືອນຕົ້ນປີ ແລະ ໃບລາຍງານກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີ, ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ. ຄະນະຜູ້ບໍລິຫານມີໜ້າທີ່ຮັບຜິດຊອບສຳລັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ຕາມນະໂຍບາຍການບັນຊີທີ່ໄດ້ກ່າວໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນໂດຍອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດຂອງການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນໂດຍສອດຄ່ອງກັບ ມາດຕະຖານສາກົນວ່າດ້ວຍການທົບທວນຄືນເລກທີ 2410, *ການທົບທວນຄືນຂໍ້ມູນດ້ານການເງິນສຳລັບໄລຍະຫົກເດືອນຕົ້ນປີ ໂດຍນັກກວດສອບອິດສະຫຼະ*. ການທົບທວນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີປະກອບດ້ວຍ ການສອບຖາມຂໍ້ມູນ, ຜູ້ທີ່ຮັບຜິດຊອບເບື້ອງຕົ້ນກ່ຽວກັບການເງິນ ແລະ ບັນຊີ, ແລະ ການນຳໃຊ້ຂັ້ນຕອນການວິເຄາະ ແລະ ທົບທວນອື່ນໆ. ການທົບທວນນີ້ມີຂອບເຂດໜ້ອຍ ກວ່າການກວດສອບໂດຍອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ດ້ວຍເຫດນັ້ນຈຶ່ງບໍ່ສາມາດເຮັດໃຫ້ພວກຂ້າພະເຈົ້າເກັບກຳຂໍ້ມູນພຽງພໍທີ່ຈະຮັບປະກັນເຖິງບັນດາບັນຫາສຳຄັນຕ່າງໆ ເຊິ່ງສາມາດພົບເຫັນໄດ້ໃນເວລາກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ອອກຄຳເຫັນຕໍ່ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ການສະຫຼຸບ

ອີງຕາມການທົບທວນຄືນ, ພວກຂ້າພະເຈົ້າພົບວ່າບໍ່ມີສິ່ງໃດທີ່ຈະເປັນສິ່ງບົ່ງຊີ້ວ່າ ເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ ສະບັບນີ້ ບໍ່ໄດ້ຖືກກະກຽມ, ໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ສະເໜີໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ກ່ຽວກັບບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີ, ເຊິ່ງໄດ້ອະທິບາຍກ່ຽວກັບນະໂຍບາຍບັນຊີທີ່ນຳໃຊ້ໂດຍບໍລິສັດ. ນະໂຍບາຍບັນຊີເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ, ຜົນການດຳເນີນງານສຳລັບໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດສຳລັບໄລຍະຫົກເດືອນຕົ້ນປີຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ມີການສະຫຼຸບແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແອ່ງ ຫວ ຈິ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

A member firm of Ernst & Young Global Limited

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຮັບ	4	3,967,775,233	4,256,175,376
ລາຍຮັບອື່ນໆຈາກການດຳເນີນງານ		748,209,810	865,346,473
ລາຍຮັບລວມ		**4,715,985,043**	**5,121,521,849**
ລາຍຈ່າຍຈາກການດຳເນີນງານ	5	(1,685,165,614)	(371,132,755)
ກຳໄລຈາກການຕີມູນຄ່າຊັບສິນເພື່ອການລົງທຶນ		-	-
ກຳໄລຈາກການດຳເນີນງານ		**3,030,819,429**	**4,750,389,094**
ລາຍຮັບທາງການເງິນ	6	427,157,606	659,451,994
ລາຍຈ່າຍທາງການເງິນ	7	-	(1,130,313,576)
ກຳໄລກ່ອນອາກອນ		**3,457,977,035**	**4,279,527,512**
ລາຍຈ່າຍອາກອນກຳໄລ	8	(606,643,512)	(703,279,341)
ກຳໄລພາຍໃນໄລຍະ		**2,851,333,523**	**3,576,248,171**
ລາຍຮັບອື່ນໆນອກການທຸລະກິດພາຍໃນໄລຍະ, ຫຼັງຫັກອາກອນ		-	-
ລວມລາຍຮັບນອກການທຸລະກິດພາຍໃນໄລຍະ, ຫຼັງຫັກອາກອນ		**2,851,333,523**	**3,576,248,171**
ກຳໄລຕໍ່ຮຸ້ນ			
- *ພື້ນຖານກຳໄລພາຍໃນປີຂອງຜູ້ຖືຮຸ້ນສາມັນ*	*18*	*19.37*	*24.30*

ກະກຽມໂດຍ:

ທ່ານ ໂຫຼວ ສ່ຽວຕິງ
ຜູ້ອຳນວຍການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫວັ່ງ ເຫວີຍລຸ່ນ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	*30 ມິຖຸນາ 2022 ກີບ*	*31 ທັນວາ 2021 ກີບ*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	9	4,201,712,303	3,384,656,995
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	10	1,263,656,713	807,835,094
ລວມຊັບສິນໝຸນວຽນ		**5,465,369,016**	**4,192,492,089**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ	11	195,659,520,000	195,659,520,000
ຊັບສິນບັດຄົງທີ່ມີຕົວຕົນ		307,234,078	325,019,848
ລວມຊັບສິນບໍ່ໝຸນວຽນ		**195,966,754,078**	**195,984,539,848**
ລວມຊັບສິນ		**201,432,123,094**	**200,177,031,937**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະສັ້ນອື່ນໆ	12	7,219,176,398	6,842,806,011
ລວມໜີ້ສິນໝຸນວຽນ		**7,219,176,398**	**6,842,806,011**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງໄລຍະຍາວອື່ນໆ	12	3,321,771,799	4,429,029,065
ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນ	8	8,218,274,829	7,611,631,316
ລວມໜີ້ສິນບໍ່ໝຸນວຽນ		**11,540,046,628**	**12,040,660,381**
ລວມໜີ້ສິນ		**18,759,223,026**	**18,883,466,392**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	13	147,199,900,000	147,199,900,000
ສ່ວນເກີນມູນຄ່າຮຸ້ນ		2,559,995,000	2,559,995,000
ຄັງແຮຕາມລະບຽບການ		3,815,920,951	3,530,787,599
ຄັງແຮເພື່ອຂະຫຍາຍທຸລະກິດ		3,815,920,951	3,530,787,599
ກຳໄລສະສົມ		25,281,163,166	24,472,095,347
ລວມທຶນ		**182,672,900,068**	**181,293,565,545**
ລວມໜີ້ສິນ ແລະ ທຶນ		**201,432,123,094**	**200,177,031,937**

ກະກຽມໂດຍ:

ທ່ານ ໂຫຼວ ສ່ຽວຕິງ
ຜູ້ອຳນວຍການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫວັ່ງ ເຫວີ່ຍຄຸນ
ຜູ້ອຳນວຍການໃຫ່ຍ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ທຶນຈົດທະບຽນທີ່ຖອກແລ້ວ ກີບ	*ສ່ວນເກີນມູນຄ່າຮຸ້ນ ກີບ*	*ຄັງແຮຕາມລະບຽບການ ກີບ*	*ຄັງແຮເພື່ອຂະຫຍາຍທຸລະກິດ ກີບ*	*ກຳໄລສະສົມ ກີບ*	*ລວມທັງໝົດ ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2021	**147,199,900,000**	**2,559,995,000**	**2,726,548,069**	**2,726,548,069**	**19,878,177,864**	**175,091,169,002**
ກຳໄລສຸດທິພາຍໃນໄລຍະ	-	-	-	-	3,576,248,171	3,576,248,171
ເງິນປັນຜົນ	-	-	-	-	(1,839,998,750)	(1,839,998,750)
ຈັດສັນກຳໄລເຂົ້າຄັງແຮ	-	-	357,624,817	357,624,817	(715,249,634)	-
ຍອດເຫຼືອນະວັນທີ 30 ມິຖຸນາ 2021	**147,199,900,000**	**2,559,995,000**	**3,084,172,886**	**3,084,172,886**	**20,899,177,651**	**176,827,418,423**
ຍອດເຫຼືອນະວັນທີ 1 ມັງກອນ 2022	**147,199,900,000**	**2,559,995,000**	**3,530,787,599**	**3,530,787,599**	**24,472,095,347**	**181,293,565,545**
ກຳໄລສຸດທິພາຍໃນໄລຍະ	-	-	-	-	2,851,333,523	2,851,333,523
ເງິນປັນຜົນ	-	-	-	-	(1,471,999,000)	(1,471,999,000)
ຈັດສັນກຳໄລເຂົ້າຄັງແຮ	-	-	285,133,352	285,133,352	(570,266,704)	-
ຍອດເຫຼືອນະວັນທີ 30 ມິຖຸນາ 2022	**147,199,900,000**	**2,559,995,000**	**3,815,920,951**	**3,815,920,951**	**25,281,163,166**	**182,672,900,068**

ກະກຽມໂດຍ:

ທ່ານ ໂຫຼວ ສ່ຽວຕິງ
ຜູ້ອຳນວຍການຝ່າຍການເງິນ
ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

ອະນຸມັດໂດຍ:

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022

	ບົດອະທິບາຍ ເລກທີ	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**3,457,977,035**	**4,279,527,512**
ການດັດແກ້ສຳລັບ:			
ລາຍຈ່າຍຄ່າຫຼຸ້ຍຫ້ຽນພາຍໃນໄລຍະ		17,785,770	6,300,923
ລາຍຈ່າຍດອກເບ້ຍ	7	-	1,130,313,576
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ			
ສ່ວນປ່ຽນແປງຂອງໜີ້ຕ້ອງຮັບ		(455,821,618)	(759,598,436)
ສ່ວນປ່ຽນແປງຂອງໜີ້ຕ້ອງສົ່ງ		(730,886,879)	80,887,540
ອາກອນກຳໄລທີ່ຈ່າຍແລ້ວ		-	-
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**2,289,054,308**	**4,737,431,115**
ກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່ທີ່ມີຕົວຕົນ		-	(344,545,458)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**-**	**(344,545,458)**
ກິດຈະກຳການຈັດຫາເງິນທຶນ			
ການຈ່າຍເງິນປັນຜົນ		(1,471,999,000)	(1,839,998,750)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການຈັດຫາເງິນທຶນ		**(1,471,999,000)**	**(1,839,998,750)**
ເງິນສົດເພີ່ມຂຶ້ນສຸດທິພາຍໃນໄລຍະ		**817,055,308**	**2,552,886,907**
ເງິນສົດໃນຕົ້ນໄລຍະ		**3,384,656,995**	**22,497,520,522**
ເງິນສົດໃນທ້າຍໄລຍະ	**9**	**4,201,712,303**	**25,050,407,429**

ກະກຽມໂດຍ:

ທ່ານ ໂຫຼວ ສ່ຽວຕິງ
ຜູ້ອຳນວຍການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022

1. ຂໍ້ມູນກ່ຽວກັບບໍລິສັດ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ແມ່ນສ້າງຕັ້ງຂຶ້ນພາຍໃຕ້ໃບທະບຽນວິສາຫະກິດເລກທີ 1169/ຈຫວ, ລົງວັນທີ 30 ພະຈິກ 2017 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດໃນຈຳນວນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບ ຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບ ຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງລ່າສຸດ ເລກທີ 1084/ຈຫວ ລົງວັນທີ 26 ພຶດສະພາ 2022 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ. ຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

ກິດຈະກຳຫຼັກຂອງບໍລິສັດ ອີງຕາມໃບທະບຽນວິສາຫະກິດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

2. ພື້ນຖານການກະກຽມ

2.1 ພື້ນຖານການກະກຽມ

ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ລວມທັງບໍລິສັດຈົດທະບຽນແມ່ນຄວນນຳໃຊ້ມາດຕະຖານລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ກງ, ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະແມ່ນຖືກອະນຸຍາດໃຫ້ເລື່ອນເວລາການນຳໃຊ້ມາດຕະຖານລາຍງານການເງິນສາກົນໄປຈົນຮອດວັນທີ 1 ມັງກອນ 2026.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2022, ເອກະສານລາຍງານການເງິນພາຍໃນໄລຍະຫົກເດືອນຕົ້ນປີ ຂອງບໍລິສັດໄດ້ມີການກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງ ເອກະສານລາຍງານການເງິນພາຍໃນໄລຍະຫົກເດືອນຕົ້ນປີ, ສະແດງເປັນ ສະກຸນເງິນກີບ ("ກີບ"), ໄດ້ຖືກສ້າງຂຶ້ນໂດຍນຳໃຊ້ມູນຄ່າຕົ້ນທຶນເດີມ ຍົກເວັ້ນຊັບສິນເພື່ອການລົງທຶນ ທີ່ໄດ້ຖືກວັດແທກຕາມມູນຄ່າຍຸດຕິທຳ.

ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນໃນໄລຍະຫົກເດືອນຕົ້ນປີ, ຜົນການດຳເນີນງານໃນໄລຍະຫົກເດືອນຕົ້ນປີ ແລະ ກະແສເງິນສົດໃນໄລຍະຫົກເດືອນຕົ້ນປີ ຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ປີການບັນຊີ

ປີການບັນຊີຂອງບໍລິສັດເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

2. ພື້ນຖານການກະກຽມ (ຕໍ່)

2.2 ການຕັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ

ການກະກຽມເອກະສານລາຍງານການເງິນຂອງບໍລິສັດ ຄະນະບໍລິຫານຕ້ອງຕັດສິນ, ຄາດຄະເນ ແລະ ຕັ້ງສົມມຸດຖານ ທີ່ມີຜົນກະທົບຕໍ່ມູນຄ່າລາຍງານຂອງລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ, ແລະ ການເປີດເຜີຍຂໍ້ມູນ, ແລະ ການເປີດເຜີຍໜີ້ສິນທີ່ອາດຈະເກີດຂຶ້ນ. ການຄາດຄະເນ ແລະ ຕັ້ງສົມມຸດຖານແມ່ນມີການປະເມີນຢ່າງຕໍ່ເນື່ອງໂດຍອີງໃສ່ປະສົບການຂອງຄະນະບໍລິຫານ ແລະ ປັດໄຈອື່ນໆ ລວມທັງການຄາດຄະເນເຫດການໃນອະນາຄົດທີ່ສົມເຫດສົມຜົນພາຍໃຕ້ແຕ່ລະສະຖານະການ. ຄວາມບໍ່ແນ່ນອນຂອງການຕັ້ງສົມມຸດຖານ ແລະ ການຄາດຄະເນເຫຼົ່ານີ້ ອາດສົ່ງຜົນໃຫ້ມີການດັດແກ້ມູນຄ່າຕາມບັນຊີຊັບສິນ ຫຼື ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ການຕັດສິນ

ໃນການປະຕິບັດຕາມນະໂຍບາຍການບັນຊີຂອງບໍລິສັດ, ຄະນະບໍລິຫານຕ້ອງໄດ້ໃຊ້ການຕັດສິນດັ່ງຕໍ່ໄປນີ້, ເຊິ່ງມີຜົນກະທົບທີ່ສຳຄັນຕໍ່ຕົວເລກທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນ:

ການຈັດປະເພດຊັບສິນ

ບໍລິສັດກຳນົດວ່າຊັບສິນຖືກຈັດປະເພດເປັນຊັບສິນເພື່ອການລົງທຶນ ຫຼື ຊັບສິນໃນສາງເມື່ອ:

- ຊັບສິນເພື່ອການລົງທຶນປະກອບດ້ວຍ ທີ່ດິນ ແລະ ອາຄານ (ສ່ວນໃຫຍ່ເປັນຫ້ອງການ, ແລະ ຮ້ານຄ້າຂາຍຍ່ອຍ) ທີ່ບໍ່ໄດ້ມີໄວ້ເພື່ອນຳໃຊ້ ຫຼື ດຳເນີນງານຂອງບໍລິສັດ, ຫຼື ເພື່ອຂາຍໃນການດຳເນີນງານທຸລະກິດທົ່ວໄປ, ແຕ່ມີໄວ້ເພື່ອຫາລາຍໄດ້ຈາກການເຊົ່າ ແລະ ການເພີ່ມຄ່າຂອງເງິນທຶນ. ບັນດາຕຶກອາຄານເຫຼົ່ານີ້ແມ່ນຖືກເຊົ່າໂດຍຜູ້ເຊົ່າ ໂດຍບໍ່ມີຈຸດປະສົງທີ່ຈະຂາຍຕາມການດຳເນີນທຸລະກິດທົ່ວໄປ.
- ຊັບສິນໃນສາງປະກອບດ້ວຍຊັບສິນທີ່ມີໄວ້ເພື່ອຂາຍໃນການດຳເນີນທຸລະກິດແບບປົກກະຕິ. ໂດຍພື້ນຖານແລ້ວ, ນີ້ແມ່ນຊັບສິນປະເພດທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈທີ່ຈະຂາຍກ່ອນ ຫຼື ເມື່ອກໍ່ສ້າງສຳເລັດ.

ນະວັນທີ 30 ມິຖຸນາ 2022, ບໍລິສັດມີພຽງຊັບສິນການລົງທຶນເທົ່ານັ້ນ ເຊິ່ງໄດ້ນຳສະເໜີໃນບົດອະທິບາຍເລກທີ 11.

ສັນຍາເຊົ່າເພື່ອການດຳເນີນງານ - ບໍລິສັດໃນຖານະເປັນຜູ້ໃຫ້ເຊົ່າ

ບໍລິສັດໄດ້ເຮັດສັນຍາເຊົ່າຊັບສິນທາງການຄ້າໃນຊັບສິນເພື່ອການລົງທຶນ. ບໍລິສັດໄດ້ກຳນົດ, ໂດຍອີງໃສ່ການປະເມີນຂໍ້ກຳນົດ ແລະ ເງື່ອນໄຂຂອງຂໍ້ຕົກລົງ ໂດຍພິຈາລະນາຄວາມສ່ຽງ ແລະ ຜົນຕອບແທນທີ່ສຳຄັນຂອງການເປັນເຈົ້າຂອງຊັບສິນເຫຼົ່ານີ້ ແລະ ບັນຊີສຳລັບສັນຍາທີ່ເປັນສັນຍາການດຳເນີນງານ.

ການຄາດຄະເນ ແລະ ສົມມຸດຖານ

ສົມມຸດຖານທີ່ສຳຄັນກ່ຽວກັບອະນາຄົດ ແລະ ແຫຼ່ງທີ່ມາສຳຄັນອື່ນໆຂອງການຄາດຄະເນທີ່ບໍ່ແນ່ນອນນະວັນທີຂອງບົດລາຍງານ, ເຊິ່ງມີຄວາມສ່ຽງທີ່ສຳຄັນໃນການປັບປຸງມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນໃນລະຫວ່າງປີການບັນຊີຕໍ່ໄປ, ໄດ້ຖືກອະທິບາຍຂ້າງລຸ່ມນີ້. ບໍລິສັດໄດ້ອີງຕາມສົມມຸດຖານ ແລະ ການຄາດຄະເນຂອງຕົນກ່ຽວກັບຕົວຊີ້ວັດການທີ່ມີໃນເວລາທີ່ບົດລາຍງານທາງການເງິນໄດ້ຖືກກະກຽມ. ສະຖານະການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດ. ເຖິງຢ່າງໃດກໍຕາມ, ອາດຈະມີການປ່ຽນແປງຍ້ອນການປ່ຽນແປງຂອງຕະຫຼາດ ຫຼື ສະຖານະການທີ່ເກີດຂຶ້ນທີ່ເກີນຄວາມສາມາດໃນການຄວບຄຸມຂອງບໍລິສັດ. ການປ່ຽນແປງດັ່ງກ່າວແມ່ນສະທ້ອນໃຫ້ເຫັນສົມມຸດຖານເມື່ອເກີດຂຶ້ນ.

2. ພື້ນຖານການກະກຽມ (ຕໍ່)

2.2 ການຕັດສິນ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ (ຕໍ່)

ການປະເມີນມູນຄ່າຊັບສິນເພື່ອການລົງທຶນ

ມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ ແມ່ນຖືກກຳນົດໂດຍຜູ້ຊ່ຽວຊານດ້ານການປະເມີນມູນຄ່າອະສັງຫາລິມະຊັບໂດຍ ນຳໃຊ້ເຕັກນິກ ແລະ ຫຼັກການປະເມີນມູນຄ່າທີ່ເປັນທີ່ຍອມຮັບຕາມການເປີດເຜີຍໃນບົດອະທິບາຍເລກທີ 11.

ການຄາດຄະເນ ແລະ ສົມມຸດຖານ

ຄວາມບໍ່ແນ່ນອນກ່ຽວກັບການຕີຄວາມໝາຍຂອງລະບຽບອາກອນທີ່ຊັບຊ້ອນ ການປ່ຽນແປງຂອງກົດໝາຍວ່າດ້ວຍອາກອນ ແລະ ຈຳນວນ ແລະ ໄລຍະເວລາຂອງລາຍໄດ້ທີ່ຕ້ອງເສຍອາກອນໃນອະນາຄົດ. ເນື່ອງຈາກລັກສະນະທີ່ມີໄລຍະຍາວ ແລະ ຄວາມຊັບຊ້ອນຂອງຂໍ້ຕົກລົງສັນຍາທີ່ມີຢູ່, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ສົມມຸດຖານທີ່ໄດ້ຕັ້ງ ໄວ້, ຫຼື ການປ່ຽນແປງໃນອະນາຄົດຕໍ່ກັບສົມມຸດຖານດັ່ງກ່າວ, ອາດຈຳເປັນຕ້ອງໄດ້ດັດແກ້ໃນອະນາຄົດກ່ຽວກັບລາຍຮັບ ແລະ ລາຍຈ່າຍທາງອາກອນທີ່ໄດ້ບັນທຶກແລ້ວ. ບໍລິສັດໄດ້ສ້າງເງິນແຮ, ໂດຍອີງໃສ່ການຄາດຄະເນທີ່ສົມເຫດສົມຜົນ, ເພື່ອ ຜົນກະທົບທີ່ອາດເກີດຂຶ້ນຈາກການກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນຂອງ ສປປ ລາວ. ຈຳນວນຂອງເງິນແຮດັ່ງກ່າວ ແມ່ນອີງໃສ່ຫຼາຍປັດໄຈເຊັ່ນ: ປະສົບການຂອງການກວດສອບອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງຂອງ ລະບຽບການອາກອນໂດຍໜ່ວຍງານອາກອນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນທີ່ຮັບຜິດຊອບ. ຄວາມແຕກຕ່າງດັ່ງກ່າວໃນ ການຕີຄວາມໝາຍ ອາດຈະເກີດຂຶ້ນຈາກເງື່ອນໄຂທີ່ພົ້ນເດັ່ນໃນ ສປປ ລາວ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

3.1 ການຈັດປະເພດໝຸນວຽນ ກັບ ບໍ່ໝຸນວຽນ

ບໍລິສັດນຳສະເໜີຊັບສິນ ແລະ ໜີ້ສິນໃນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີໂດຍອີງໃສ່ການຈັດປະເພດ ໝຸນວຽນ/ບໍ່ໝຸນວຽນ. ການຈັດເປັນຊັບສິນໝຸນວຽນກໍຕໍ່ເມື່ອ:

- ຄາດວ່າຈະໄດ້ຮັບຮູ້ ຫຼື ມີຈຸດປະສົງທີ່ຈະຂາຍ ຫຼື ບໍລິໂພກໃນຮອບວຽນການດຳເນີນງານເປັນປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້ - ຂາຍ
- ຄາດວ່າຈະຮັບຮູ້ໄດ້ພາຍໃນສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ, ຫຼື
- ເງິນສົດ ຫຼື ທຽບເທົ່າເງິນສົດເວັ້ນເສຍແຕ່ຖືກຈຳກັດການແລກປ່ຽນ ຫຼື ນຳໃຊ້ເພື່ອຊຳລະໜີ້ສິນຢ່າງໜ້ອຍສິບສອງ ເດືອນຫຼັງຈາກໄລຍະຂອງບົດລາຍງານ.

ບໍລິສັດໄດ້ຈັດປະເພດຊັບສິນອື່ນໆທັງໝົດ ເປັນຊັບສິນບໍ່ໝຸນວຽນ.

ການຈັດເປັນໜີ້ສິນໝຸນວຽນກໍຕໍ່ເມື່ອ:

- ຄາດວ່າຈະມີການຊຳລະໃນຮອບວຽນການດຳເນີນງານປົກກະຕິ
- ຖືກຈັດຂຶ້ນໄວ້ເພື່ອຈຸດປະສົງຂອງການຊື້ - ຂາຍ
- ມີກຳນົດຊຳລະພາຍໃນສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ, ຫຼື
- ບໍ່ມີສິດທີ່ຈະເລື່ອນການຊຳລະໜີ້ເປັນເວລາຢ່າງໜ້ອຍສິບສອງເດືອນຫຼັງຈາກໄລຍະຂອງບົດລາຍງານ

ບໍລິສັດໄດ້ຈັດປະເພດໜີ້ສິນອື່ນໆທັງໝົດເປັນໜີ້ສິນບໍ່ໝຸນວຽນ

ຊັບສິນ ແລະ ໜີ້ສິນທີ່ຕິດພັນກັບອາກອນລໍຖ້າຊຳລະສະສາງ ແມ່ນຖືກຈັດປະເພດເປັນຊັບສິນ ແລະ ໜີ້ສິນບໍ່ໝຸນວຽນ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.2 ການວັດແທກມູນຄ່າຍຸດຕິທຳ

ບໍລິສັດໄດ້ວັດແທກຊັບສິນເພື່ອການລົງທຶນຕາມມູນຄ່າຍຸດຕິທຳ ນະວັນທີຂອງບົດລາຍງານ. ບໍລິສັດບໍ່ມີເຄື່ອງມືທາງການເງິນ ທີ່ໃຊ້ວັດແທກມູນຄ່າຍຸດຕິທຳ. ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບມູນຄ່າຍຸດຕິທຳ ສຳລັບລາຍການທີ່ຖືກວັດແທກດ້ວຍ ຫຼື ມູນຄ່າຍຸດຕິທຳທີ່ເປີດເຜີຍ, ໄດ້ສົງລວມຕາມບົດອະທິບາຍດັ່ງຕໍ່ໄປນີ້:

- ການເປີດເຜີຍນະໂຍບາຍການບັນຊີ *ບົດອະທິບາຍເລກທີ 3.5*
- ວິທີການປະເມີນມູນຄ່າ, ການຄາດຄະເນ ແລະ ການສົມມຸດຖານທີ່ສຳຄັນ *ບົດອະທິບາຍເລກທີ 11*
- ຊັບສິນເພື່ອການລົງທຶນ *ບົດອະທິບາຍເລກທີ 11*

ມູນຄ່າຍຸດຕິທຳ ແມ່ນລາຄາທີ່ຈະໄດ້ຮັບຈາກການຂາຍຊັບສິນ ຫຼື ຈ່າຍເພື່ອໂອນໜີ້ສິນໃນການດຳເນີນທຸລະກຳ ທີ່ເປັນລະບຽບ ລະຫວ່າງຜູ້ເຂົ້າຮ່ວມຕະຫຼາດ ນະວັນການວັດແທກ. ການວັດແທກມູນຄ່າຍຸດຕິທຳ ແມ່ນອີງໃສ່ການສົມມຸດຖານວ່າມີທຸລະກຳການຂາຍ ຊັບສິນ ຫຼື ໂອນໜີ້ສິນດັ່ງກ່າວ:

- ໃນຕະຫຼາດຫຼັກ ສຳລັບຊັບສິນ ຫຼື ໜີ້ສິນ, ຫຼື
- ໃນກໍລະນີທີ່ບໍ່ມີຕະຫຼາດຫຼັກ, ໃນຕະຫຼາດທີ່ໄດ້ປຽບຫຼາຍທີ່ສຸດ ສຳລັບຊັບສິນ ຫຼື ໜີ້ສິນ

ຕະຫຼາດຫຼັກ ຫຼື ຕະຫຼາດທີ່ໄດ້ປຽບທີ່ສຸດແມ່ນບໍລິສັດຕ້ອງສາມາດເຂົ້າເຖິງໄດ້.

ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ໜີ້ສິນ ແມ່ນຖືກວັດແທກໂດຍນຳໃຊ້ສົມມຸດຖານທີ່ຜູ້ເຂົ້າຮ່ວມຕະຫຼາດຈະນຳໃຊ້ໃນເວລາທີ່ ກຳນົດລາຄາຂອງຊັບສິນ ຫຼື ໜີ້ສິນ, ໂດຍສົມມຸດວ່າຜູ້ເຂົ້າຮ່ວມຕະຫຼາດປະຕິບັດເພື່ອຜົນປະໂຫຍດທາງເສດຖະກິດສູງສຸດຂອງ ພວກເຂົາ.

ການວັດແທກມູນຄ່າຍຸດຕິທຳຂອງຊັບສິນທີ່ບໍ່ແມ່ນການເງິນໄດ້ຄຳນຶງເຖິງຄວາມສາມາດຂອງຜູ້ເຂົ້າຮ່ວມຕະຫຼາດໃນການສ້າງ ຜົນປະໂຫຍດທາງເສດຖະກິດໂດຍການນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ຫຼື ການຂາຍໃຫ້ຜູ້ເຂົ້າຮ່ວມຕະຫຼາດ ອື່ນທີ່ຈະນຳໃຊ້ຊັບສິນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ.

ບໍລິສັດນຳໃຊ້ເຕັກນິກການປະເມີນມູນຄ່າທີ່ເໝາະສົມຕາມສະພາບການ ແລະ ເພື່ອໃຫ້ມີຂໍ້ມູນທີ່ພຽງພໍໃນການວັດແທກມູນ ຄ່າທີ່ຍຸດຕິທຳ, ເພີ່ມການນຳໃຊ້ທີ່ກ່ຽວຂ້ອງ, ສາມາດສັງເກດໄດ້ ແລະ ຫຼຸດການໃຊ້ຂໍ້ມູນທີ່ບໍ່ສາມາດສັງເກດໄດ້.

ຊັບສິນ ແລະ ໜີ້ສິນທັງໝົດ ທີ່ມູນຄ່າຍຸດຕິທຳຖືກວັດແທກ ຫຼື ເປີດເຜີຍໃນເອກະສານລາຍງານການທາງເງິນຖືກຈັດປະເພດ ພາຍໃນ ລຳດັບມູນຄ່າຍຸດຕິທຳ, ເຊິ່ງອະທິບາຍດັ່ງຕໍ່ໄປນີ້, ໂດຍອີງຕາມຂໍ້ມູນລະດັບຕ່ຳສຸດທີ່ສຳຄັນໃນການວັດມູນຄ່າຍຸດຕິທຳ ທັງໝົດ:

- ລະດັບ 1 - ອ້າງອີງລາຄາຕະຫຼາດ (ບໍ່ມີການດັດແກ້) ໃນຕະຫຼາດທີ່ມີການເຄື່ອນໄຫວ ສຳລັບຊັບສິນ ຫຼື ໜີ້ສິນທີ່ຄ້າຍຄື ກັນ
- ລະດັບ 2 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸດຕິທຳ ແມ່ນ ສາມາດສັງເກດເຫັນໂດຍທາງກົງ ຫຼື ໂດຍທາງອ້ອມ
- ລະດັບ 3 - ເຕັກນິກການປະເມີນມູນຄ່າຂໍ້ມູນລະດັບຕ່ຳສຸດທີ່ມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸດຕິທຳແມ່ນບໍ່ສາ ມາດສັງເກດໄດ້

ສຳລັບຊັບສິນ ແລະ ໜີ້ສິນທີ່ຖືກຮັບຮູ້ໃນເອກະສານລາຍງານການເງິນສຳລັບໄລຍະຫົກເດືອນຕົ້ນປີດ້ວຍມູນຄ່າຍຸດຕິທຳ ບົນ ພື້ນຖານການເກີດຂຶ້ນເປັນປະຈຳບໍລິສັດກຳນົດວ່າການໂອນຍ້າຍເກີດຂຶ້ນລະຫວ່າງລະດັບໃນລຳດັບຂັ້ນໂດຍມີການປະເມີນ ການຈັດປະເພດຄືນໃໝ່ (ອີງໃສ່ຂໍ້ມູນໃນລະດັບຕ່ຳສຸດເຊິ່ງມີຄວາມສຳຄັນຕໍ່ການວັດແທກມູນຄ່າຍຸດຕິທຳທັງໝົດ) ໃນປີທີ່ ສິ້ນສຸດຂອງບົດລາຍງານແຕ່ລະໄລຍະ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 ອາກອນ

ອາກອນກຳໄລພາຍໃນປີ

ອາກອນກຳໄລພາຍໃນປີທາງດ້ານຊັບສິນ ແລະ ໜີ້ສິນແມ່ນຖືກວັດແທກຕາມຈຳນວນທີ່ຄາດວ່າຈະເກັບຄືນ ຫຼື ຈ່າຍໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ໃຊ້ໃນການຄິດໄລ່ຈຳນວນເງິນດັ່ງກ່າວຕາມຂໍ້ກຳນົດທາງກົດໝາຍໂດຍທົ່ວໄປ, ນະວັນທີຂອງບົດລາຍງານ.

ອາກອນກຳໄລໃນປັດຈຸບັນທີ່ກ່ຽວຂ້ອງກັບບັນດາລາຍການຂອງຜູ້ຖືຮຸ້ນໂດຍກົງ ຈະຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ຢູ່ໃນບົດລາຍງານຜົນການດຳເນີນງານນອກການທຸລະກິດ. ຄະນະບໍລິຫານຈະປະເມີນສະຖານະການເກັບຄືນອາກອນເປັນໄລຍະຕາມກົດລະບຽບຂອງອາກອນ ພາຍໃຕ້ການຕີຄວາມໝາຍ ແລະ ສ້າງຂໍ້ກຳນົດຕ່າງໆທີ່ເໝາະສົມ.

ອາກອນລໍຖ້າຊຳລະສະສາງ

ອາກອນລໍຖ້າຊຳລະສະສາງແມ່ນຄິດໄລ່ໂດຍໃຊ້ວິທີໜີ້ສິນຕາມໃບລາຍງານຖານະການເງິນຈາກຄວາມແຕກຕ່າງຊົ່ວຄາວນະວັນທີຂອງໃບລາຍງານການຖານະການເງິນລະຫວ່າງພື້ນຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີຂອງລາຍການດັ່ງກ່າວສຳລັບຈຸດປະສົງການລາຍງານທາງການເງິນ ນະວັນທີລາຍງານ.

ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນ ແມ່ນໄດ້ຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວທາງອາກອນທັງໝົດ, ຍົກເວັ້ນ:

- ໃນກໍລະນີທີ່ອາກອນລໍຖ້າຊຳລະສະສາງດ້ານໜີ້ສິນເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳນະວັນທີທຸລະກຳສິ່ງຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ, ແລະ
- ໃນສ່ວນຕ່າງຊົ່ວຄາວທາງອາກອນ ມີຄວາມກ່ຽວຂ້ອງກັບການລົງທຶນໃນບໍລິສັດໃນເຄືອທີ່ສາມາດຄວບຄຸມເວລາໃນການເກັບຄືນ ຂອງສ່ວນຕ່າງຊົ່ວຄາວ ແລະ ມີຄວາມເປັນໄປໄດ້ທີ່ວ່າ ສ່ວນຕ່າງຊົ່ວຄາວຈະບໍ່ສາມາດເກັບຄືນມາໄດ້ໃນອະນາຄົດ.

ອາກອນລໍຖ້າຊຳລະສະສາງດ້ານຊັບສິນແມ່ນຖືກຮັບຮູ້ສຳລັບສ່ວນຕ່າງຊົ່ວຄາວທາງອາກອນ, ຍອດຍົກມາຂອງສິນເຊື່ອອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນອາກອນທີ່ບໍ່ໄດ້ໃຊ້, ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ກຳໄລທາງອາກອນຈະສາມາດໃຊ້ໄດ້ກັບສ່ວນຕ່າງຊົ່ວຄາວທີ່ໃຊ້ຫັກອາກອນ, ຍອດຍົກມາຕໍ່ຂອງສິນເຊື່ອອາກອນທີ່ບໍ່ໄດ້ໃຊ້ ແລະ ຂາດທຶນທາງອາກອນທີ່ບໍ່ໄດ້ໃຊ້ສາມາດນຳໃຊ້ໄດ້, ຍົກເວັ້ນ:

- ໃນກໍລະນີທີ່ອາກອນລໍຖ້າຊຳລະສະສາງທາງຊັບສິນເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນໃນທຸລະກຳທີ່ສົ່ງຜົນກະທົບຕໍ່ກຳໄລທາງການບັນຊີ ແລະ ກຳໄລ ຫຼື ຂາດທຶນທາງອາກອນ, ແລະ
- ໃນສ່ວນຂອງສ່ວນຕ່າງຊົ່ວຄາວທີ່ໃຊ້ຫັກອາກອນມີຄວາມກ່ຽວຂ້ອງກັບການລົງທຶນໃນບໍລິສັດໃນເຄືອ. ອາກອນລາຍຮັບລໍຖ້າຊຳລະສະສາງດ້ານຊັບສິນ ແມ່ນຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ວ່າ ສ່ວນຕ່າງຊົ່ວຄາວຈະສາມາດເກັບຄືນໄດ້ໃນອະນາຄົດ ແລະ ກຳໄລທາງອາກອນຈະສາມາດໃຊ້ໄດ້ກັບສ່ວນຕ່າງຊົ່ວຄາວທີ່ສາມາດນຳໃຊ້ໄດ້.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.3 ອາກອນ (ຕໍ່)

ອາກອນລ່ວງໜ້າຊຳລະສະສາງ (ຕໍ່)

ມູນຄ່າທາງບັນຊີຂອງອາກອນລາຍຮັບລ່ວງໜ້າຊຳລະສະສາງດ້ານຊັບສິນ ແມ່ນຖືກທົບທວນຄືນນະມື້ທີ່ອອກໃບລາຍງານຖານະການເງິນແຕ່ລະເທື່ອ ແລະ ຈະຫຼຸດລົງຕາມກໍລະນີທີ່ບໍ່ໜ້າຈະເປັນໄປໄດ້ທີ່ຈະມີກຳໄລທາງອາກອນພຽງພໍທີ່ຈະອະນຸຍາດໃຫ້ໄດ້ເກັບຄືນທັງໝົດ ຫຼື ບາງສ່ວນຂອງຊັບສິນ. ອາກອນລາຍຮັບລ່ວງໜ້າຊຳລະສະສາງດ້ານຊັບສິນກ່ອນໜ້ານີ້ທີ່ບໍ່ໄດ້ຖືກຮັບຮູ້ ຈະຖືກປະເມີນຄືນໃໝ່ ໃນແຕ່ລະເທື່ອຂອງນະມື້ອອກໃບລາຍງານຖານະການເງິນ ແລະ ໄດ້ຖືກຮັບຮູ້ໃນກໍລະນີທີ່ມີຄວາມເປັນໄປໄດ້ໃນອະນາຄົດວ່າ ກຳໄລທາງອາກອນ ຈະອະນຸຍາດໃຫ້ອາກອນລ່ວງໜ້າຊຳລະສະສາງດ້ານຊັບສິນສາມາດເກັບຄືນໄດ້.

ອາກອນລາຍຮັບລ່ວງໜ້າຊຳລະສະສາງດ້ານຊັບສິນ ແລະ ໜີ້ສິນ ແມ່ນຖືກວັດແທກໂດຍໃຊ້ອັດຕາອາກອນທີ່ຄາດວ່າຈະນຳໃຊ້ໃນປີເມື່ອມີການຮັບຮູ້ຊັບສິນ ຫຼື ໜີ້ສິນຕາມອັດຕາອາກອນ ແລະ ອັດຕາຕາມກົດໝາຍທີ່ມີຜົນບັງຄັບໃຊ້ນະມື້ອອກໃບລາຍງານຖານະການເງິນ.

ອາກອນລ່ວງໜ້າຊຳລະສະສາງຈະຖືກຄິດໄລ່ ຫຼື ໂອນໄປໃນໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານນອກການທຸລະກິດໃນໄລຍະຫົກເດືອນຕົ້ນປີ, ຍົກເວັ້ນແຕ່ມີການພົວພັນໂດຍກົງກັບສ່ວນຂອງຜູ້ຖືຮຸ້ນ, ໃນກໍລະນີທີ່ອາກອນລ່ວງໜ້າຊຳລະສະສາງຖືກແບ່ງໂດຍຜູ້ຖືຮຸ້ນ.

ອາກອນລາຍຮັບລ່ວງໜ້າຊຳລະສະສາງດ້ານຊັບສິນ ແລະ ໜີ້ສິນແມ່ນຫັກລ້າງກັນ, ຖ້າຫາກວ່າມີການບັງຄັບໃຊ້ຕາມກົດໝາຍໃນການກຳນົດຊັບສິນທາງອາກອນປັດຈຸບັນກັບໜີ້ສິນທາງອາກອນລາຍໄດ້ປັດຈຸບັນ ແລະ ອາກອນລ່ວງໜ້າຊຳລະສະສາງທີ່ກ່ຽວຂ້ອງກັບນິຕິບຸກຄົນທີ່ມີການເກັບພາສີຄືກັນ ແລະ ເຈົ້າໜ້າທີ່ສ່ວຍສາອາກອນດຽວກັນ:

- ນິຕິບຸກຄົນທີ່ມີການເສຍພາສີຄືກັນ;
- ຫຼື ໃນເວລາທີ່ບໍລິສັດຕັ້ງໃຈທີ່ຈະຊຳລະໜີ້ສິນ ແລະ ຊັບສິນທາງອາກອນພາຍໃນປີ ບົນພື້ນຖານສຸດທິ ຫຼື ຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນພ້ອມກັນ ແຕ່ລະໄລຍະໃນອະນາຄົດ ເມື່ອຄາດວ່າອາກອນລ່ວງໜ້າຊຳລະສະສາງທາງດ້ານຊັບສິນ ແລະ ໜີ້ສິນຈຳນວນຫຼາຍຈະຖືກຊຳລະ ຫຼື ເກັບຄືນ.

ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມຂອງລາຍຮັບຄ່າເຊົ່າ ແລະ ລາຍຮັບອື່ນໆໄດ້ຖືກຄິດໄລ່ໂດຍໃຊ້ອັດຕາອາກອນທີ່ກ່ຽວຂ້ອງພາຍໃນປີ.

ອີງຕາມນະໂຍບາຍການບັນຊີສຳລັບ ອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງກັບສັນຍາການຮ່ວມມືທຸລະກິດ ("BCC") ແມ່ນໄດ້ຖືກນຳສະເໜີໃນບົດອະທິບາຍເລກທີ 3.14.

ການດັດແກ້ຕົວເລກໜີ້ຕ້ອງສົ່ງທາງອາກອນສຳລັບປີທີ່ຜ່ານມາ ແມ່ນອີງໃສ່ຜົນຂອງບົດໄລ່ລ່ຽງອາກອນທີ່ໄດ້ບັນທຶກໂດຍກົງເຂົ້າກຳໄລສະສົມ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4 ເງິນຕາຕ່າງປະເທດ

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີເປັນສະກຸນເງິນກີບ, ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງ ບໍລິສັດ. ການເຮັດທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດໃນເບື້ອງຕົ້ນບໍລິສັດແມ່ນບັນທຶກໂດຍການນຳໃຊ້ອັດຕາແລກປ່ຽນ ທີ່ວໄປນະມື້ທີ່ເກີດທຸລະກຳທຳອິດເພື່ອຮັບຮູ້. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດແມ່ນໄດ້ຖືກ ຕີມູນຄ່າຄືນໃໝ່ເປັນສະກຸນເງິນຫຼັກໃນມື້ຂອງບົດລາຍງານ.

ສ່ວນຕ່າງທີ່ເກີດຂຶ້ນຈາກການຊຳລະສະສາງ ຫຼື ຕີມູນຄ່າລາຍການທີ່ເປັນເງິນຕາຕ່າງປະເທດໄດ້ຖືກບັນທຶກໃນໃບລາຍງານ ຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດສຳລັບໄລຍະຫົກເດືອນຕົ້ນປີ.

ລາຍການທີ່ບໍ່ແມ່ນເງິນຕາຖືກວັດແທກຈາກມູນຄ່າຕົ້ນທຶນເດີມໃນສະກຸນເງິນຕາຕ່າງປະເທດ ແມ່ນຖືກຕີມູນຄ່າໂດຍການນຳ ໃຊ້ອັດຕາແລກປ່ຽນນະວັນທີຂອງທຸລະກຳເບື້ອງຕົ້ນ. ລາຍການທີ່ບໍ່ແມ່ນເງິນຕາທີ່ຖືກວັດແທກໃນມູນຄ່າຍຸດຕິທຳໃນສະກຸນ ເງິນຕາຕ່າງປະເທດ ແລະ ໄດ້ຖືກຕີມູນຄ່າໂດຍການນຳໃຊ້ອັດຕາແລກປ່ຽນນະວັນທີກຳນົດມູນຄ່າຍຸດຕິທຳ.

3.5 ຊັບສິນເພື່ອການລົງທຶນ

ຊັບສິນເພື່ອການລົງທຶນປະກອບດ້ວຍຊັບສິນທີ່ກິດຈະການມີໄວ້ຄອບຄອງເພື່ອຫາຜົນປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼື ການ ເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ. ຊັບສິນທີ່ຖືໄວ້ຄອບຄອງເພື່ອໃຫ້ເຊົ່າແມ່ນຖືກຈັດປະເພດເປັນຊັບສິນເພື່ອການ ລົງທຶນເມື່ອມີລາຍໄດ້ຈາກຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຊັບສິນ ຫຼື ທັງສອງຢ່າງ, ແທນທີ່ຈະມີໄວ້ສຳລັບຂາຍຕາມ ການດຳເນີນງານຂອງທຸລະກິດປົກກະຕິ, ຫຼື ເພື່ອໃຊ້ໃນການຜະລິດ ຫຼື ໃຊ້ໃນການບໍລິຫານງານ.

ຊັບສິນເພື່ອການລົງທຶນແມ່ນຖືກປະເມີນຕາມຕົ້ນທຶນທີ່ເກີດຂຶ້ນເບື້ອງຕົ້ນ, ເຊິ່ງປະກອບດ້ວຍຕົ້ນທຶນການເຮັດທຸລະກິດ. ຕົ້ນ ທຶນການເຮັດທຸລະກິດປະກອບດ້ວຍພາສີໃນການໂອນຊັບສິນ ຄ່າທຳນຽມວິຊາຊີບສຳລັບການບໍລິການທາງກົດໝາຍ ແລະ ລາຍຈ່າຍທີ່ຈຳເປັນເພື່ອເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ. ມູນຄ່າຕາມບັນຊີແມ່ນລວມທັງຕົ້ນທຶນການປ່ຽນແທນ ສ່ວນໃດ ໜຶ່ງຂອງຊັບສິນເພື່ອການລົງທຶນທີ່ມີຢູ່ນະເວລາທີ່ຕົ້ນທຶນນັ້ນເກີດຂຶ້ນ ຖ້າຫາກວ່າເປັນໄປຕາມເກນການຮັບຮູ້.

ພາຍຫຼັງການຮັບຮູ້ເບື້ອງຕົ້ນ, ຊັບສິນເພື່ອການລົງທຶນແມ່ນຈະຖືກບັນທຶກໂດຍມູນຄ່າຍຸດຕິທຳ, ເຊິ່ງສະທ້ອນເຖິງສະພາບ ຕະຫຼາດນະມື້ຂອງການລາຍງານ. ກຳໄລ ຫຼື ຂາດທຶນທີ່ເກີດຂຶ້ນຈາກການປ່ຽນແປງໃນມູນຄ່າຍຸດຕິທຳຂອງຊັບສິນເພື່ອການ ລົງທຶນແມ່ນໄດ້ລວມຢູ່ໃນ ກຳໄລ ຫຼື ຂາດທຶນ ແລະ ລາຍຮັບອື່ນໆນອກການທຸລະກິດໃນໄລຍະທີ່ເກີດຂຶ້ນ ລວມເຖິງຜົນ ກະທົບທາງອາກອນທີ່ກ່ຽວຂ້ອງ.

ການໂອນແມ່ນເກີດຂຶ້ນແກ່ (ຫຼື ຈາກ) ຊັບສິນເພື່ອການລົງທຶນເມື່ອມີການປ່ຽນແປງການນຳໃຊ້. ສຳລັບການໂອນຈາກຊັບ ສິນເພື່ອການລົງທຶນມາເປັນຊັບສິນທີ່ຖືຄອງໄວ້ໂດຍເຈົ້າຂອງ, ຕົ້ນທຶນທີ່ຄາດວ່າຈະໄດ້ຮັບຈາກບັນຊີພາຍຫຼັງແມ່ນມູນຄ່າ ຍຸດຕິທຳນະມື້ທີ່ມີການປ່ຽນແປງການໃຊ້ງານ.

ຊັບສິນເພື່ອການລົງທຶນແມ່ນຖືກຢຸດຮັບຮູ້ເມື່ອມີການສະສາງ ຫຼື ຢຸດນຳໃຊ້ຊັບສິນນັ້ນຢ່າງຖາວອນ ແລະ ຄາດວ່າຈະບໍ່ໄດ້ຮັບ ຜົນປະໂຫຍດທາງທຸລະກິດໃນອະນາຄົດຈາກການສະສາງຊັບສິນ. ຄວາມແຕກຕ່າງລະຫວ່າງຂັ້ນຕອນການສະສາງສຸດທິ ແລະ ມູນຄ່າຕາມບັນຊີຂອງຊັບສິນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນໃນໄລຍະຂອງການຢຸດຮັບຮູ້.

3. ນິດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.6 ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

3.7 ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆ

ໜີ້ຕ້ອງຮັບຄ່າເຊົ່າ ແລະ ອື່ນໆແມ່ນຖືກຮັບຮູ້ຕາມມູນຄ່າໃນໃບເກັບເງິນຕົ້ນສະບັບ ຍົກເວັ້ນເມື່ອມູນຄ່າຕາມເວລາຂອງເງິນມີຄວາມສຳຄັນ, ເຊິ່ງໃນກໍລະນີນີ້ຕ້ອງຮັບຮູ້ໃນມູນຄ່າຍຸດຕິທຳ ແລະ ວັດແທກພາຍຫຼັງຕາມຕົ້ນທຶນຄ່າເສື່ອມມູນຄ່າ.

ເງິນແຮຈະຖືກບັນທຶກເມື່ອມີຫຼັກຖານທີ່ຊັດເຈນວ່າ ບໍລິສັດຈະບໍ່ສາມາດເກັບຄືນໄດ້ເຕັມຈຳນວນ.

ຍອດເຫຼືອຈະຖືກສະສາງອອກເມື່ອຄວາມເປັນໄປໄດ້ຂອງການເກັບຄືນໄດ້ຖືກປະເມີນວ່າມີໂອກາດໜ້ອຍຫຼາຍ.

3.8 ເງິນມັດຈຳຄ່າເຊົ່າ

ໜີ້ເງິນມັດຈຳຄ່າເຊົ່າແມ່ນຖືກຮັບຮູ້ເບື້ອງຕົ້ນຕາມມູນຄ່າຍຸດຕິທຳ ແລະ ຫຼັງຈາກທີ່ວັດແທກຕາມຈຳນວນທີ່ຕ້ອງຈ່າຍໃນອະນາຄົດ.

ສ່ວນຜິດຕ່າງລະຫວ່າງມູນຄ່າຍຸດຕິທຳເບື້ອງຕົ້ນ ແລະ ຈຳນວນເງິນສ່ວນໜ້ອຍທີ່ລວມຢູ່ໃນລາຍຮັບຄ່າເຊົ່າໃນການດຳເນີນງານ ແລະ ຖືກຮັບຮູ້ຕາມວິທີເສັ້ນຊື່ຕະຫຼອດໄລຍະເວລາເຊົ່າ.

3.9 ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມ

ເງິນກູ້ ແລະ ການກູ້ຢືມທັງໝົດແມ່ນຖືກຮັບຮູ້ຕາມມູນຄ່າທີ່ໄດ້ຮັບຫັກຕົ້ນທຶນທຸລະກຳທີ່ກ່ຽວຂ້ອງໂດຍກົງ. ພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ, ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມແມ່ນໄດ້ຮັບການວັດແທກພາຍຫຼັງຕາມມູນຄ່າທີ່ຕ້ອງຈ່າຍໃນອະນາຄົດ. ອັດຕາດອກເບ້ຍເງິນກູ້ ແລະ ການກູ້ຢືມທີ່ເພີ່ມຂຶ້ນແມ່ນຈະຖືກຄິດໄລ່ໂດຍໃຊ້ອັດຕາດອກເບ້ຍທີ່ກຳນົດໄວ້ໃນສັນຍາ.

3.10 ສັນຍາເຊົ່າ

ການກຳນົດວ່າຂໍ້ຕົກລົງແມ່ນ (ຫຼື ມີ) ການເຊົ່າ ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງນະວັນທີເລີ່ມຂອງສັນຍາເຊົ່າ. ຂໍ້ຕົກລົງແມ່ນ ຫຼື ເປັນສັນຍາເຊົ່າ ຖ້າຫາກວ່າການປະຕິບັດຂອງຂໍ້ຕົກລົງຂຶ້ນກັບການໃຊ້ຊັບສິນສະເພາະ ຫຼື ຂໍ້ຕົກລົງທີ່ສະແດງເຖິງສິດໃນການນຳໃຊ້ຊັບສິນ, ເຖິງແມ່ນວ່າສິດນັ້ນຈະບໍ່ລະບຸຊັດເຈນໃນຂໍ້ຕົກລົງ.

ບໍລິສັດເປັນຜູ້ໃຫ້ເຊົ່າ

ສັນຍາເຊົ່າທີ່ບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຄວາມເປັນເຈົ້າໃນຊັບສິນໄດ້ຖືກຈັດປະເພດເປັນການເຊົ່າເພື່ອການດຳເນີນງານ. ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຈາກການເຈລະຈາ ແລະ ການດຳເນີນການເຊົ່າຈະລວມຢູ່ໃນມູນຄ່າຕາມບັນຊີຂອງຊັບສິນທີ່ເຊົ່າ ແລະ ຮັບຮູ້ຕາມໄລຍະຂອງສັນຍາເຊົ່າໂດຍໃຊ້ຫຼັກເກນດຽວກັບລາຍຮັບຄ່າເຊົ່າ. ຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຮັບໃນໄລຍະທີ່ໄດ້ລາຍຮັບ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11 ຄັງສຳຮອງ

ອີງຕາມມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ບໍລິສັດຕ້ອງຫັກເງິນແຮ 10% ຂອງກຳໄລຫຼັງອາກອນໃນແຕ່ລະປີເຂົ້າຄັງສຳຮອງຕາມລະບຽບການ. ເມື່ອຄັງສັງຮອງດັ່ງກ່າວບັນລຸ 50% ຂອງເງິນທຶນຈົດທະບຽນ, ບໍລິສັດອາດຈະເລື່ອນການສຳຮອງດັ່ງກ່າວ, ເວັ້ນເສຍແຕ່ກົດໝາຍຈະກຳນົດ.

ການຈັດສັນກຳໄລເຂົ້າຄັງເພື່ອຂະຫຍາຍກິດຈະການແມ່ນສອດຄ່ອງກັບມາດຕາ 16 ຂອງຂໍ້ກຳນົດຂອງບໍລິສັດ. ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022, ບໍລິສັດໄດ້ສຳຮອງ 10% ຂອງກຳໄລເຂົ້າຄັງເພື່ອຂະຫຍາຍທຸລະກິດ.

3.12 ການຮັບຮູ້ລາຍຮັບ

ລາຍຮັບແມ່ນໄດ້ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງເສດຖະກິດຈະໄຫຼເຂົ້າບໍລິສັດ ແລະ ລາຍຮັບສາມາດວັດແທກໄດ້ຢ່າງໜ້າເຊື່ອຖື ບໍ່ວ່າຈະໄດ້ຮັບການຊຳລະເງິນຕອນໃດ. ລາຍຮັບແມ່ນຖືກວັດແທກດ້ວຍມູນຄ່າຍຸດຕິທຳຕາມການພິຈາລະນາທີ່ໄດ້ຮັບ ຫຼື ຄ້າງຮັບ, ໂດຍຄຳນຶງເຖິງເງື່ອນໄຂການຊຳລະເງິນຕາມສັນຍາ ແລະ ບໍ່ລວມພາສີ ຫຼື ອາກອນ.

ເງື່ອນໄຂການຮັບຮູ້ສະເພາະທີ່ລະບຸໄວ້ຂ້າງລຸ່ມນີ້ຕ້ອງເປັນໄປຕາມເງື່ອນໄຂ ກ່ອນທີ່ຈະຮັບຮູ້ລາຍຮັບ.

ລາຍຮັບຄ່າເຊົ່າ

ບໍລິສັດແມ່ນຜູ້ໃຫ້ເຊົ່າໃນການເຊົ່າເພື່ອການດຳເນີນງານ. ລາຍຮັບຄ່າເຊົ່າທີ່ເກີດຂຶ້ນຈາກການເຊົ່າເພື່ອການດຳເນີນງານໃນຊັບສິນເພື່ອການລົງທຶນແມ່ນບັນທຶກເປັນລາຍຮັບຕາມວິທີເສັ້ນຊື່ໃນໄລຍະເວລາການເຊົ່າ ແລະ ລວມຢູ່ໃນລາຍຮັບໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານອື່ນໆນອກການທຸລະກິດ, ເນື່ອງຈາກມີລັກສະນະການດຳເນີນງານ, ຍົກເວັ້ນລາຍຮັບຈາກຄ່າເຊົ່າທີ່ບໍ່ແນ່ນອນທີ່ຕ້ອງຖືກຮັບຮູ້ເມື່ອເກີດຂຶ້ນ.

ຕົ້ນທຶນທາງກົງເບື້ອງຕົ້ນທີ່ເກີດຂຶ້ນໃນການເຈລະຈາ ແລະ ການຕົກລົງໃນການເຊົ່າເພື່ອການດຳເນີນງານແມ່ນໄດ້ຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາການເຊົ່າຕາມພື້ນຖານດຽວກັນກັບລາຍຮັບຈາກສັນຍາເຊົ່າ.

ແຮງຈູງໃຈໃນການເຊົ່າຂອງຜູ້ເຊົ່າໄດ້ຖືກຮັບຮູ້ເປັນການຫຼຸດລົງຂອງສັນຍາລາຍຮັບຄ່າເຊົ່າໂດຍວິທີເສັ້ນຊື່ຕະຫຼອດອາຍຸສັນຍາເຊົ່າ. ໄລຍະເວລາການເຊົ່າແມ່ນໄລຍະເວລາທີ່ຍົກເລີກບໍ່ໄດ້ ພ້ອມກັບໄລຍະເວລາເພີ່ມເຕີມທີ່ຜູ້ເຊົ່າມີທາງເລືອກທີ່ຈະສືບຕໍ່ການເຊົ່າ, ໃນເວລາຮັບຮູ້ການເຊົ່າ, ທີ່ຜູ້ອຳນວຍການແມ່ນມີຄວາມແນ່ໃຈຢ່າງສົມເຫດສົມຜົນວ່າຜູ້ເຊົ່າຈະໃຊ້ຕົວເລືອກນັ້ນ.

ຈຳນວນເງິນທີ່ໄດ້ຮັບຈາກຜູ້ເຊົ່າເພື່ອຍຸດຕິສັນຍາການເຊົ່າ ຫຼື ເພື່ອຊົດເຊີຍຄວາມເສຍຫາຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານອື່ນໆນອກທຸລະກິດໃນເວລາທີ່ສິດທີ່ຈະໄດ້ຮັບນັ້ນເກີດຂຶ້ນ.

ລາຍຮັບຈາກການດຳເນີນງານອື່ນໆ

ລາຍຮັບຈາກການດຳເນີນງານອື່ນໆປະກອບດ້ວຍລາຍຮັບຈາກການໃຫ້ເຊົ່າປ້າຍໂຄສະນາ ແລະ ການຈັດກິດຈະກຳ ເຊິ່ງຖືກຮັບຮູ້ໃນໄລຍະການໃຫ້ບໍລິການ.

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC")

ລາຍຮັບຈາກສັນຍາການຮ່ວມມືທຸລະກິດ ("BCC") ແມ່ນຖືກຮັບຮູ້ຕາມນະໂຍບາຍການບັນຊີທີ່ສະແດງໃນບົດອະທິບາຍເລກທີ 3.14.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.12 ການຮັບຮູ້ລາຍຮັບ (ຕໍ່)

ລາຍຮັບດອກເບ້ຍ

ລາຍຮັບດອກເບ້ຍຖືກຮັບຮູ້ເພາະວ່າເປັນການຄ້າງຮັບໂດຍນຳໃຊ້ວິທີການອັດຕາດອກເບ້ຍທີ່ແທ້ຈິງ (EIR). ອັດຕາດອກເບ້ຍທີ່ແທ້ຈິງ ແມ່ນອັດຕາທີ່ໃຊ້ໃນການຄິດຫຼຸດປະມານການເງິນສົດຮັບ ຫຼື ຈ່າຍໃນອະນາຄົດຕະຫຼອດອາຍຸທີ່ຄາດໄວ້ຂອງເຄື່ອງມືທາງການເງິນ ຫຼື ໄລຍະເວລາທີ່ສັ້ນກວ່າ, ຕາມເໝາະສົມກັບມູນຄ່າທາງບັນຊີສຸດທິຂອງຊັບສິນທາງການເງິນ. ລາຍຮັບດອກເບ້ຍແມ່ນຢູ່ໃນລາຍຮັບການເງິນທີ່ສະແດງຢູ່ໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານອື່ນໆນອກການທຸລະກິດ.

3.13 ຕົ້ນທຶນການກູ້ຢືມ

ຕົ້ນທຶນການກູ້ຢືມທີ່ກ່ຽວຂ້ອງໂດຍກົງກັບການໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ຕ້ອງໃຊ້ໄລຍະເວລາ ເພື່ອພ້ອມສຳລັບການໃຊ້ ຫຼື ການຂາຍໄດ້ຖືກບັນທຶກເປັນສ່ວນໜຶ່ງຂອງຕົ້ນທຶນຊັບສິນນັ້ນ. ຕົ້ນທຶນການກູ້ຢືມອື່ນໆທັງໝົດຈະເປັນລາຍຈ່າຍທີ່ເກີດຂຶ້ນໃນໄລຍະ. ຕົ້ນທຶນການກູ້ຢືມປະກອບດ້ວຍດອກເບ້ຍ ແລະ ຕົ້ນທຶນອື່ນໆທີ່ເກີດຂຶ້ນຈາກການກູ້ຢືມເງິນ.

3.14 ສັນຍາການຮ່ວມມືທຸລະກິດ ("BCC") ໃນຮູບແບບການດຳເນີນງານທີ່ຄວບຄຸມຮ່ວມກັນ

ສັນຍາການຮ່ວມມືທຸລະກິດແມ່ນການດຳເນີນງານທີ່ບໍ່ໄດ້ປະກອບເປັນໜ່ວຍງານໃໝ່, ຂາຮຸ້ນຂອງ BCC ແມ່ນມີພັນທະ ແລະ ມີສິດໄດ້ຮັບຜົນປະໂຫຍດຕາມທີ່ໄດ້ລະບຸໄວ້ໃນສັນຍາ. ກິດຈະກຳຂອງ BCC ແມ່ນປະຕິບັດພ້ອມກັນກັບກິດຈະກຳການດຳເນີນງານປະຈຳຂອງຂາຮຸ້ນ.

ບໍລິສັດໄດ້ຮັບຮູ້ລາຍຮັບຈາກ BCC ແລະ ພາລະຜູກພັນທາງອາກອນມູນຄ່າເພີ່ມທີ່ກ່ຽວຂ້ອງຕາມລາຍຮັບສຸດທິຕາມສັນຍາ, ເຊິ່ງເປັນຄວາມແຕກຕ່າງກັນລະຫວ່າງລາຍຮັບລວມ ແລະ ສັດສ່ວນກຳໄລຂອງຂາຮຸ້ນອື່ນຂອງ BCC.

ສຳລັບອາກອນມູນຄ່າເພີ່ມທີ່ເກີດຂຶ້ນຈາກສັນຍາທີ່ໄດ້ແຈ້ງເສຍອາກອນ ແລະ ຈ່າຍຕາມລາຍຮັບສຸດທິທີ່ໄດ້ຮັບຈາກບໍລິສັດ.

ລາຍລະອຽດຂອງການດຳເນີນງານທີ່ບໍລິສັດທີ່ມີໃນປັດຈຸບັນ ມີຢູ່ໃນບົດອະທິບາຍເລກທີ 4.

3.15 ລາຍຮັບລໍຖ້າຊຳລະສະສາງ

ລາຍຮັບລໍຖ້າຊຳລະສະສາງແມ່ນໜີ້ສິນໃນໃບລາຍງານຖານະການເງິນຂອງບໍລິສັດທີ່ປະກອບດ້ວຍ ລາຍຈ່າຍລ່ວງໜ້າ, ທັງທາງກົງ ຫຼື ທາງອ້ອມໃຫ້ແກ່ບໍລິສັດ, ຈາກລູກຄ້າຂອງບໍລິສັດ ສຳລັບສິນຄ້າ ຫຼື ການບໍລິການທີ່ຍັງບໍ່ທັນໄດ້ສົ່ງ. ລາຍຮັບລໍຖ້າຊຳລະສະສາງແມ່ນຖືກຮັບຮູ້ເປັນລາຍຮັບໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານອື່ນໆນອກການທຸລະກິດເຊິ່ງແມ່ນສິນຄ້າ ຫຼື ການບໍລິການທີ່ສົ່ງໃຫ້ແກ່ລູກຄ້າແລ້ວ.

3.16 ກຳໄລຕໍ່ຮຸ້ນ

ກຳໄລຂັ້ນພື້ນຖານຕໍ່ມູນຄ່າຮຸ້ນແມ່ນຖືກຄິດໄລ່ໂດຍສ່ວນແບ່ງ ກຳໄລ/(ຂາດທຶນ) ສຸດທິ ຫຼັງຈາກອາກອນພາຍໃນປີ ເຊິ່ງຈ່າຍໃຫ້ຜູ້ຖືຮຸ້ນສາມັນຂອງບໍລິສັດ (ຫຼັງຈາກດັດແກ້ເງິນໂບນັດ ແລະ ກອງທຶນສະຫວັດດີການ) ໂດຍຕົວເລກຖ່ວງນ້ຳໜັກສະເລ່ຍຂອງຮຸ້ນທີ່ຍັງຄ້າງພາຍໃນປີ.

ລາຍໄດ້ທີ່ສຸນເສຍຕໍ່ປະລິມານຮຸ້ນແມ່ນບໍ່ໄດ້ຖືກຄິດໄລ່ ແລະ ນຳສະເໜີ.

3. ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.17 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງປະກອບມີວິສາຫະກິດ ແລະ ບຸກຄົນທີ່ຄວບຄຸມ, ຫຼື ຖືກຄວບຄຸມໂດຍບໍລິສັດ, ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ, ຫຼື ທີ່ຢູ່ພາຍໃຕ້ການຄວບຄຸມໂດຍທົ່ວໄປຂອງບໍລິສັດ.

ພາກສ່ວນທີ່ກ່ຽວຂ້ອງຍັງລວມເອົາບັນດາບໍລິສັດທີ່ກ່ຽວຂ້ອງ ແລະ ບຸກຄົນທີ່ເປັນເຈົ້າຂອງໂດຍທາງກົງ ຫຼື ທາງອ້ອມ ທີ່ມີອຳນາດໃນການລົງຄະແນນສຽງໃນບໍລິສັດ ທີ່ໃຫ້ພວກເຂົາມີອິດທິພົນທີ່ສຳຄັນຕໍ່ບໍລິສັດ, ບຸກຄະລາກອນຜູ້ບໍລິຫານຫຼັກ, ຜູ້ອຳນວຍການ, ແລະ ພະນັກງານທີ່ມີສິດອຳນາດໃນການວາງແຜນ ແລະ ທິດທາງໃນການດຳເນີນງານຂອງບໍລິສັດ.

3.18 ຂໍ້ມູນຈຳແນກສ່ວນງານ

ຂໍ້ມູນຈຳແນກສ່ວນງານແມ່ນອົງປະກອບໜຶ່ງທີ່ຈຳແນກສ່ວນງານຕ່າງຫາກ ໂດຍບໍລິສັດທີ່ມີສ່ວນໃນການສະໜອງຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ພາກສ່ວນທຸລະກິດ) ຫຼື ການສະໜອງຜະລິດຕະພັນ ຫຼື ການບໍລິການໃນເຂດເສດຖະກິດສະເພາະ (ພາກສ່ວນທາງພູມສັນຖານ) ເຊິ່ງຂຶ້ນກັບຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກຂໍ້ມູນຈຳແນກສ່ວນງານ.

ກິດຈະກຳຫຼັກຂອງບໍລິສັດຕໍ່ໃບອະນຸຍາດດຳເນີນທຸລະກິດແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການຕ່າງໆ. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນມີຂຶ້ນພາຍໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດໃຫ້ເຊົ່າພື້ນທີ່ ຫຼື ສະຖານທີ່ທີ່ກິດຈະກຳຫຼັກຂອງບໍລິສັດ. ດ້ວຍເຫດນີ້, ການບໍລິຫານຂອງບໍລິສັດມີທັດສະນະວ່າມີພຽງແຕ່ໜຶ່ງສ່ວນງານສຳລັບທຸລະກິດ ແລະ ພູມສາດເທົ່ານັ້ນ ແລະ ດັ່ງນັ້ນການນຳສະເໜີຂໍ້ມູນສ່ວນງານແມ່ນບໍ່ຈຳເປັນ.

4. ລາຍຮັບ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຮັບຈາກສັນຍາການຮ່ວມມື (*)	725,084,810	343,225,554
ລາຍຮັບຈາກການເຊົ່າ	3,242,690,423	3,912,949,822
	3,967,775,233	**4,256,175,376**

(*) ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແຟຼດທິນ ຊິເນຜ້ຽ (ລາວ) ຈຳກັດ (ເມເຈີ), ບໍລິສັດໄດ້ໃຫ້ເຊົ່າໃນໄລຍະເວລາ 20 ປີ ນັບແຕ່ ວັນທີ 7 ສິງຫາ 2015 ເຖິງ ວັນທີ 6 ສິງຫາ 2035 ໃນສ່ວນຂອງຊັບສິນເພື່ອການລົງທຶນເຂົ້າໃນການດຳເນີນງານທາງດ້ານໂຮງໜັງຮ່ວມກັນກັບເມເຈີ. ລາຍຮັບຈາກການດຳເນີນງານຂອງໂຮງໜັງ ແມ່ນແບ່ງກັນລະຫວ່າງບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ຕາມການກຳນົດໄວ້ໃນສັນຍາ.

5. ລາຍຈ່າຍຈາກການດຳເນີນງານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	17,785,770	6,300,922
ລາຍຈ່າຍໃຫ້ພະນັກງານ	137,829,620	134,677,383
ຄ່າບໍລິຫານພື້ນທີ່ສ່ວນກາງ (*)	981,452,586	-
ອື່ນໆ	548,097,638	230,154,450
	1,685,165,614	**371,132,755**

(*) ພາຍໃນເດືອນຕຸລາ 2021, ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ໄດ້ລົງນາມໃນຂໍ້ຕົກລົງກ່ຽວກັບຄ່າທຳນຽມການບໍລິຫານຊັບສິນຂອງວຽງຈັນເຊັ້ນເຕີ. ດັ່ງນັ້ນ, ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ຈະເປັນຜູ້ໃຫ້ບໍລິການບໍລິຫານຊັບສິນສຳລັບຮ້ານຄ້າຍ່ອຍ ແລະ ຫ້ອງການຂອງອາຄານວຽງຈັນເຊັ້ນເຕີ ກວມເນື້ອທີ່ 5,651.71 ຕາແມັດ ດ້ວຍອັດຕາບໍລິການດັ່ງນີ້:

- ພື້ນທີ່ສູນການຄ້າ 7 ໂດລາສະຫະລັດ/ຕາແມັດຕໍ່ເດືອນ
- ພື້ນທີ່ຫ້ອງການ 1 ໂດລາສະຫະລັດ/ຕາແມັດຕໍ່ເດືອນ
- ພື້ນທີ່ອື່ນໆ 2 ໂດລາສະຫະລັດ/ຕາແມັດຕໍ່ເດືອນ

6. ລາຍຮັບທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຮັບສຸດທິຈາກສ່ວນຕ່າງອັດຕາແລກປ່ຽນເງິນຕາຕ່າງປະເທດ	427,157,606	659,451,994
	427,157,606	**659,451,994**

7. ລາຍຈ່າຍທາງການເງິນ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຈ່າຍດອກເບ້ຍໃຫ້ທາງພາກສ່ວນທີ່ກ່ຽວຂ້ອງ	-	1,130,313,576
	-	**1,130,313,576**

8. ອາກອນ

ລາຍຈ່າຍອາກອນກຳໄລ

ພາຍໃຕ້ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ອັດຕາອາກອນກຳໄລປົກກະຕິແມ່ນ 20%. ນອກຈາກນັ້ນ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຈະໄດ້ຮັບອັດຕາທີ່ຫີຈູງໃຈໃນອັດຕາ 13% ເປັນເວລາ 4 ປີນັບຕັ້ງແຕ່ມື້ຈົດທະບຽນ. ດັ່ງນັ້ນ, ອັດຕາອາກອນກຳໄລທີ່ໄດ້ນຳໃຊ້ຂອງບໍລິສັດໃນປີ 2022 ແມ່ນ 13%.

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	-	96,635,828
ລາຍຈ່າຍອາກອນລໍຖ້າຊຳລະສະສາງ	606,643,513	606,643,513
	606,643,513	**703,279,341**

ການແຈ້ງອາກອນທີ່ບໍລິສັດຍື່ນຈະຕ້ອງຜ່ານການກວດກາໂດຍເຈົ້າໜ້າທີ່ອາກອນ. ເນື່ອງຈາກການບັງຄັບໃຊ້ກົດໝາຍ ແລະ ຂໍ້ກຳນົດດ້ານອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນພາຍໃນໄລຍະຫົກເດືອນຕົ້ນປີ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

8. ອາກອນ (ຕໍ່)

ລາຍຈ່າຍອາກອນກຳໄລ (ຕໍ່)

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ກຳໄລກ່ອນອາກອນທາງບັນຊີ	**3,457,977,035**	**4,279,527,512**
ອັດຕາອາກອນກຳໄລ	13%	13%
ລາຍຈ່າຍອາກອນກຳໄລ	449,537,014	556,338,576
ການດັດແກ້ເພີ່ມ/(ຫຼຸດ) ອາກອນກຳໄລ		
ລາຍຈ່າຍດອກເບ້ຍທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ	-	146,940,765
ກຳໄລຈາກອັດຕາແລກປ່ຽນເງິນຕາທີ່ຍັງບໍ່ເກີດຂຶ້ນ	(51,795,601)	-
ມູນຄ່າສູນເສຍອາກອນທີ່ບໍ່ໄດ້ຖືກຮັບຮູ້ວ່າເປັນຊັບສິນ		
ອາກອນລໍຖ້າຊຳລະສະສາງ	208,902,099	-
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	**606,643,512**	**703,279,341**

(*)ມູນຄ່າສູນເສຍອາກອນທີ່ໄດ້ຄາດການໄວ້ແມ່ນບໍ່ໄດ້ຮັບການສະຫຼຸບຈາກບັນດາເຈົ້າໜ້າທີ່ສ່ວຍສາອາກອນ ນະວັນທີລາຍງານເອກະສານລາຍງານການເງິນໃນໄລຍະຫົກເດືອນຕົ້ນປີ. ຊັບສິນອາກອນລໍຖ້າຊຳລະສະສາງແມ່ນໄດ້ຖືກຮັບຮູ້ຢູ່ໃນມູນຄ່າສູນເສຍອາກອນ ຍ້ອນວ່າກຳໄລພາສີອາກອນໃນອະນາຄົດແມ່ນບໍ່ໄດ້ສຶບເນື່ອງຢູ່ໃນບັນຫາດັ່ງກ່າວ.

ອາກອນພາຍໃນໄລຍະ

ໜີ້ຕ້ອງສິ່ງອາກອນກຳໄລພາຍໃນໄລຍະແມ່ນອີງໃສ່ກຳໄລທາງອາກອນພາຍໃນໄລຍະ. ອາກອນລາຍໄດ້ຂອງບໍລິສັດພາຍໃນໄລຍະຕ່າງຈາກກຳໄລທີ່ລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ ເນື່ອງຈາກວ່າອາກອນລາຍໄດ້ດັ່ງກ່າວແມ່ນບໍ່ລວມລາຍຮັບ ຫຼື ລາຍຈ່າຍທາງອາກອນ ຫຼື ຕັດຍອດໄລຍະອື່ນ ບໍ່ລວມລາຍການທີ່ບໍ່ອະນຸຍາດໃຫ້ຫັກເປັນລາຍຈ່າຍ ແລະ ບໍ່ຖືເປັນລາຍຮັບ. ໜີ້ຕ້ອງສິ່ງອາກອນກຳໄລພາຍໃນໄລຍະທີ່ຕ້ອງຈ່າຍຂອງບໍລິສັດແມ່ນຄິດໄລ່ໂດຍໃຊ້ອັດຕາອາກອນທີ່ໄດ້ກຳນົດໄວ້ນະວັນທີຂອງບົດລາຍງານ.

ອາກອນລໍຖ້າຊຳລະສະສາງ

ຕາຕະລາງຕໍ່ໄປນີ້ແມ່ນໜີ້ສິນອາກອນລໍຖ້າຊຳລະສະສາງທີ່ຮັບຮູ້ໂດຍບໍລິສັດ, ແລະ ລາຍການເຄື່ອນໄຫວແມ່ນລະຫວ່າງໄລຍະປັດຈຸບັນ ແລະ ໄລຍະກ່ອນ.

8. ອາກອນ (ຕໍ່)

ອາກອນລໍຖ້າຊຳລະສະສາງ (ຕໍ່)

	ໃນລາຍງານຖານະການເງິນ ສຳລັບໄລຍະຫົກເດືອນຕົ້ນປີ		*ໃນລາຍງານຜົນການດຳເນີນງານ ແລະ ຜົນການດຳເນີນງານນອກການທຸລະກິດ*	*ສະກຸນເງິນ: ກີບ*
	30 ມິຖຸນາ 2022	*31 ທັນວາ 2021*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2022*	*ສຳລັບໄລຍະຫົກ ເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2021*
ໜີ້ສິນອາກອນລໍຖ້າຊຳລະສະສາງ				
ຄວາມແຕກຕ່າງລະຫວ່າງຖານອາກອນ ແລະ ຖານການບັນຊີທີ່ກ່ຽວຂ້ອງກັບຊັບສິນເພື່ອການລົງທຶນ	8,218,274,829	7,611,631,316	606,643,512	606,643,513
ໜີ້ສິນອາກອນລໍຖ້າຊຳລະສະສາງສຸດທິດ້ານໜີ້ສິນ	***8,218,274,829***	***7,611,631,316***		
ລາຍຈ່າຍອາກອນລໍຖ້າຊຳລະສະສາງສຸດທິໃນໃບລາຍງານຜົນການດຳເນີນງານ			***606,643,512***	***606,643,513***

9. ເງິນສົດ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ເງິນສົດໃນຄັງ	97,207,852	11,526,254
ເງິນຝາກທະນາຄານ	4,104,504,451	3,373,130,741
	4,201,712,303	**3,384,656,995**

10. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ *(ບົດອະທິບາຍເລກທີ 14)*	263,331,757	-
ໜີ້ຕ້ອງຮັບຈາກຜູ້ເຊົ່າ	1,171,769,926	979,280,064
ຫັກ: ເງິນແຮຈາກໜີ້ເສຍ	(171,444,970)	(171,444,970)
	1,263,656,713	**807,835,094**

11. ຊັບສິນເພື່ອການລົງທຶນ

ໃນວັນທີ 30 ພະຈິກ 2017, ບໍລິສັດແມ່ - ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ໂອນຊັບສິນໃຫ້ເຊົ່າ ("ຊັບສິນເພື່ອການລົງທຶນ - ສ່ວນປະກອບທີ 1") ເຊິ່ງປະກອບດ້ວຍຮ້ານຄ້າຍ່ອຍ ແລະ ຫ້ອງການດ້ວຍ ພື້ນທີ່ລວມ 9,607.88 ຕາແມັດ.

ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຮັບໂອນພື້ນທີ່ເພີ່ມເຕີມ 1,709.5 ຕາແມັດ ໃນຊັ້ນ 2, 4, 5 ແລະ 8 ("ຊັບສິນເພື່ອການລົງທຶນ - ສ່ວນປະກອບທີ 2") ຂອງຕຶກວຽງຈັນເຊັ້ນເຕີ ຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອ ຈຳກັດ ພາຍໃຕ້ສັນຍາຊື້ລະຫວ່າງສອງບໍລິສັດ.

ລາຍການເຄື່ອນໄຫວຂອງຊັບສິນເພື່ອການລົງທຶນແມ່ນມີດັ່ງນີ້:

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2022

	ລວມ *ກີບ*
ນະວັນທີ 1 ມັງກອນ	**195,659,520,000**
ດັດແກ້ມູນຄ່າຍຸດຕິທຳ	-
ນະວັນທີ 30 ມິຖຸນາ	**195,659,520,000**

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ລວມ *ກີບ*
ນະວັນທີ 1 ມັງກອນ	**194,125,161,160**
ດັດແກ້ສຳລັບມູນຄ່າຍຸດຕິທຳ	1,534,358,840
ນະວັນທີ 31 ທັນວາ	**195,659,520,000**

11.1 ຕົ້ນທຶນຊັບສິນເພື່ອການລົງທຶນ

ຕົ້ນທຶນຂອງຊັບສິນເພື່ອການລົງທຶນ - ສ່ວນປະກອບທີ 1

ຂໍ້ມູນລາຍລະອຽດຂອງຊັບສິນເພື່ອການລົງທຶນ - ສ່ວນປະກອບທີ 1 ມີດັ່ງນີ້:

- ພາກ A: ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ ໃນຊັ້ນທີ 1, 2, 4 ແລະ 6 ຂອງຕຶກວຽງຈັນເຊັ້ນເຕີ ໂດຍມີເນື້ອທີ່ 5,753.66 ຕາແມັດ (ຫົວໜ່ວຍເລກທີ A1003, A2003, A1012, A1017-2, A1018, A1021, A1020, A1023, A1038, A2049, A4003-1, A4009, B4001, C1016, F6020 ແລະ F6027);
- ພາກສ່ວນ B: ພື້ນທີ່ໂຄສະນາ ແລະ ພື້ນທີ່ຫ້ອງການ ໃນຊັ້ນທີ 1, 6, 7 ແລະ 9 ຂອງຕຶກວຽງຈັນເຊັ້ນເຕີ ໂດຍມີເນື້ອທີ່ 3,854.22 ຕາແມັດ (ຫົວໜ່ວຍ ເລກທີ A1007-1, F6001, F6002, F6003, F6004, F6005, F6006, F6007, F6008, F6009-1, F6009-2, F6010 ຫາ F6015, F6016-1, F6016-2, F6017, F6018, F6019, F6021 ຫາ F6026, F6028 ຫາ F6031, F6032-1, F6032-2, F6033 ຫາ F6049, F7004 ຫາ F7010, F9001 ຫາ F9012 ແລະ A1000).

11. ຊັບສິນເພື່ອການລົງທຶນ (ຕໍ່)

11.1 ຕົ້ນທຶນຊັບສິນເພື່ອການລົງທຶນ (ຕໍ່)

ຊັບສິນເພື່ອການລົງທຶນນີ້ - ອົງປະກອບທີ 1 ແມ່ນຕັ້ງຢູ່ ຖະໜົນ ຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ໄລຍະເວລາການໃຫ້ເຊົ່າທັງໝົດແມ່ນ 50 ປີ ແລະ ສາມາດຕໍ່ສັນຍາສຳປະທານໄດ້ຕື່ມ ອີກ 20 ປີ, ແຕ່ວັນທີ 29 ກັນຍາ 2010 ອີງຕາມສັນຍາປະທານທີ່ດິນ ລົງວັນທີ 29 ກັນຍາ 2010 ແລະ ໃບສັນຍາສຳ ປະທານທີ່ດິນເພີ່ມເຕີມ ລົງວັນທີ 29 ເມສາ 2014 ແລະ ໃບທະບຽນສຳປະທານລົງວັນທີ 8 ພຶດສະພາ 2014 ເຊິ່ງອອກ ໂດຍ ເຈົ້າໜ້າທີ່ນະຄອນຫຼວງວຽງຈັນມອບໃຫ້ແກ່ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ ໄດ້ຮັບໃບຕາດິນ ເມື່ອວັນທີ 4 ເມສາ 2014 ຈາກກົມຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ນະຄອນຫຼວງວຽງຈັນ.

ໃນເບື້ອງຕົ້ນບໍລິສັດໄດ້ຮັບຮູ້ຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ຕາມຕົ້ນທຶນ, ຕາມລາຄາທີ່ຕົກລົງກັນ ລະຫວ່າງ ບໍລິສັດ ແລະ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດ. ລາຄາດັ່ງກ່າວໄດ້ຖືກກຳນົດ ໂດຍອີງໃສ່ບົດລາຍງານການປະເມີນມູນຄ່າ ໃນວັນທີ 26 ມີນາ 2018 ໂດຍ ບໍລິສັດ Sims Property Consultants ຈຳກັດ, ທີ່ປຶກສາພາຍນອກຈາກປະເທດໄທ, ເຊິ່ງມູນຄ່າຊັບສິນເພື່ອການລົງທຶນທັງໝົດແມ່ນ:

- ພາກ A: 95,999,200,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ;
- ພາກ B: 64,232,500,000 ກີບ ໂດຍສິດໃນການເຊົ່າເປັນໄລຍະເວລາ 62.87 ປີ.

ຕົ້ນທຶນຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 2

ລາຄາຊື້ຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນ 30,198,788,739 ກີບ (ລວມອາກອນມູນຄ່າເພີ່ມ 10%). ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ເຊິ່ງປະກອບດ້ວຍ 14 ໜ່ວຍຕັ້ງຢູ່ໃນ ຊັ້ນ 2, 4, 5 ແລະ ຊັ້ນ 8 ຂອງອາຄານດຽວ ກັນຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1.

11.2 ການວັດແທກມູນຄ່າຍຸດຕິທຳ - ຊັບສິນເພື່ອການລົງທຶນ

ນະໂຍບາຍ ແລະ ຂັ້ນຕອນການປະເມີນມູນຄ່າຂອງບໍລິສັດສຳລັບການຕີມູນຄ່າຊັບສິນ ແມ່ນໄດ້ຖືກສະເໜີໂດຍຄະນະຜູ້ ບໍລິຫານ ໃນຂະນະທີ່ ຄະນະກຳມະການກວດສອບເປັນຜູ້ກຳນົດໃນແຕ່ລະປີ. ຄະນະຜູ້ບໍລິຫານຈະແນະນຳ ແລະ ຄະນະກຳມະ ການກວດສອບແຕ່ງຕັ້ງຜູ້ປະເມີນພາຍໃນ/ພາຍນອກເຊິ່ງມີໜ້າທີ່ຮັບຜິດຊອບໃນການປະເມີນມູນຄ່າຊັບສິນຂອງບໍລິສັດ ເພື່ອ ຈຸດປະສົງໃນການກຳນົດມູນຄ່າຍຸຕິທຳໃນເອກະສານລາຍງານການເງິນປະຈຳປີ. ເງື່ອນໄຂໃນການຄັດເລືອກລວມມີຄວາມຮູ້ ກ່ຽວກັບຕະຫຼາດ, ຊື່ສຽງ, ຄວາມເປັນເອກະລາດ ແລະ ບໍ່ວ່າຈະເປັນມາດຕະຖານດ້ານວິຊາຊີບ. ຜູ້ປະເມີນຜິນແມ່ນຈະມີການ ປ່ຽນທຸກໆສາມປີ.

ການປ່ຽນແປງເຕັກນິກຂອງການປະເມີນມູນຄ່າ

ນະວັນທີ 30 ມິຖຸນາ 2021, ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ມູນຄ່າຍຸຕິທຳຂອງຊັບສິນ ເພື່ອການລົງທຶນ - ອົງປະກອບທີ 2 ໄດ້ຖືກກຳນົດໂດຍລາຍຮັບສຸດທິຈາກການດຳເນີນກິດຈະການທີ່ເກີດຈາກຊັບສິນ ແລະ ຫານດ້ວຍອັດຕາຕົ້ນທຶນ (ສ່ວນໝຸດ). ເນື່ອງຈາກ ການປ່ຽນແປງສະພາບແວດລ້ອມຂອງທຸລະກິດ, ບໍລິສັດເຊື່ອວ່າວິທີການ ຄິດໄລ່ສ່ວນໝຸດກະແສເງິນສົດ (DCF) ໃຫ້ຄວາມໂປ່ງໃສດີກວ່າວິທີຈິດເຂົ້າເປັນລາຍຮັບ ແລະ ໄດ້ຕັດສິນໃຈທີ່ຈະປ່ຽນແປງ ວິທີການປະເມີນມູນຄ່າໃນຂະນະກະກຽມເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດນະວັນທີ 31 ທັນວາ 2021 ແລະ ໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022. ການປ່ຽນແປງວິທີການປະເມີນຜິນນີ້ແມ່ນຖືກນຳໃຊ້ຢ່າງຕໍ່ເນື່ອງ, ເນື່ອງຈາກເປັນການປ່ຽນແປງການຄາດຄະເນ.

11. ຊັບສິນເພື່ອການລົງທຶນ (ຕໍ່)

11.2 ການວັດແທກມູນຄ່ຍຸດຕິທຳ - ຊັບສິນເພື່ອການລົງທຶນ (ຕໍ່)

ສຳລັບໄລຍະເວລາຫົກເດືອນສິ້ນສຸດ 30 ມິຖຸນາ 2021

ຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນຖືກປະເມີນດ້ວຍວິທີຈິດເຂົ້າເປັນລາຍຮັບ, ເຊິ່ງວ່າ ມູນຄ່າຍຸຕິທຳຂອງຊັບສິນແມ່ນອີງຕາມລາຍຮັບສຸດທິຈາກການດຳເນີນກິດຈະການທີ່ເກີດຈາກຊັບສິນ ແລະ ຫານດ້ວຍອັດຕາຕົ້ນທຶນ (ສ່ວນໜຸດ). ມູນຄ່າຍຸຕິທຳແມ່ນກຳນົດໂດຍອີງຕາມບົດລາຍງານການປະເມີນມູນຄ່າຊັບສິນນະວັນທີ 25 ມັງກອນ 2021 ເຊິ່ງອອກໂດຍ ບໍລິສັດ ລາວສາກົນປະເມີນຊັບສິນ ຈຳກັດ. ພາຍໃຕ້ວິທີຈິດເຂົ້າລາຍຮັບ, ຄວາມສາມາດໃນການສ້າງລາຍໄດ້ຂອງຊັບສິນແມ່ນຖືກຄາດຄະເນໂດຍໃຊ້ຄ່າເຊົ່າຕາມສັນຍາທີ່ມີການເຊົ່າ ແລະ ລາຄາຄ່າເຊົ່າໃນຕະຫຼາດຄູ່ແຂ່ງທີ່ດຳເນີນກິດຈະການການປະເພດດຽວກັນ. ຈາກນັ້ນຈະມີການຫັກສ່ວນທີ່ຫວ່າງ, ການເກັບຄືນບໍ່ໄດ້ ແລະ ລາຍຈ່າຍໃນການດຳເນີນກິດຈະການ. ລາຍຮັບສຸດທິຈາກການດຳເນີນກິດຈະການຈະຖືກແບ່ງອອກໃຫ້ອັດຕາຕົ້ນທຶນ ໂດຍລວມເພື່ອຮັບເອົາຄວາມຄິດເຫັນຂອງມູນຄ່າສຳລັບຊັບສິນດັ່ງກ່າວ. ອັດຕາການຈິດເຂົ້າຕົ້ນທຶນສະແດງເຖິງຄວາມສຳພັນລະຫວ່າງລາຍຮັບສຸດທິຈາກການດຳເນີນກິດຈະການ ແລະ ມູນຄ່າກິດຈະການ.

ບໍລິສັດປະເມີນມູນຄ່ຍຸດຕິທຳຂອງຊັບສິນເພື່ອການລົງທຶນ – ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ – ອົງປະກອບທີ 2 ມາຮອດວັນທີ 30 ມິຖຸນາ 2021 ຍັງມີມູນຄ່າຄືເກົ່າເມື່ອທຽບໃສ່ມູນຄ່ຍຸດຕິທຳໃນວັນທີ 31 ທັນວາ 2020.

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

ມູນຄ່າຍຸຕິທຳຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ແມ່ນການຄິດໄລ່ໂດຍວິທີສ່ວນໜຸດກະແສເງິນສົດ (DCF). ມູນຄ່າຍຸຕິທຳແມ່ນກຳນົດໂດຍອີງຕາມບົດລາຍງານການປະເມີນມູນຄ່າຊັບສິນ ນະວັນທີ 14 ມີນາ 2022 ເຊິ່ງອອກໂດຍ ບໍລິສັດ ລາວສາກົນປະເມີນຊັບສິນ ຈຳກັດ.

ພາຍໃຕ້ວິທີການສ່ວນໜຸດກະແສເງິນສົດ, ມູນຄ່າຍຸຕິທຳໄດ້ຖືກຄາດຄະເນໂດຍການຕັ້ງສົມມຸດຖານກ່ຽວກັບຜົນປະໂຫຍດ ແລະ ໜີ້ສິນຂອງຜູ້ເປັນເຈົ້າຂອງຕະຫຼອດອາຍຸຂອງການໃຊ້ງານຂອງຊັບສິນ ລວມທັງມູນຄ່າທີ່ມີຢູ່ ຫຼື ມູນຄ່າຢຸດເຊົານຳໃຊ້. ວິທີການນີ້ປະກອບດ້ວຍການຄາດຄະເນຂອງກະແສເງິນສົດຕາມຜົນປະໂຫຍດທີ່ແທ້ຈິງຂອງຊັບສິນ. ສຳລັບກະແສເງິນສົດທີ່ຄາດຄະເນຕາມຄວາມເໝາະສົມ, ອັດຕາສ່ວນໜຸດຈາກຕະຫຼາດ ແມ່ນຖືກນຳໃຊ້ເພື່ອສ້າງມູນຄ່າປັດຈຸບັນຂອງກະແສລາຍຮັບທີ່ກ່ຽວຂ້ອງກັບຊັບສິນ. ຕາມປົກກະຕິ ຜົນໄດ້ຮັບທີ່ອອກມາຈະຖືກກຳນົດໄວ້ຕ່າງຫາກ ແລະ ແຕກຕ່າງຈາກອັດຕາສ່ວນໜຸດ.

ໄລຍະເວລາຂອງກະແສເງິນສົດ ແລະ ໄລຍະເວລາສະເພາະຂອງການໄຫຼເຂົ້າ ແລະ ໄຫຼອອກ ແມ່ນໄດ້ຖືກກຳນົດໂດຍເຫດການເຊັ່ນວ່າ ການທົບທວນຄ່າເຊົ່າ, ການຕໍ່ອາຍຸການເຊົ່າ ແລະ ການໃຫ້ເຊົ່າໃໝ່, ການປັບປຸງໃໝ່, ຫຼື ການຕົບແຕ່ງໃໝ່ທີ່ກ່ຽວຂ້ອງ. ໄລຍະເວລາທີ່ເໝາະສົມແມ່ນເຄື່ອນໄຫວຕາມປົກກະຕິຂຶ້ນກັບພຶດຕິກຳຂອງຕະຫຼາດ ຕາມລັກສະນະປະເພດຂອງຊັບສິນຕົວຈິງ. ກະແສເງິນສົດໃນແຕ່ໄລຍະ ໂດຍທົ່ວໄປແມ່ນໄດ້ຄາດຄະເນຕາມລາຍຮັບທັງໝົດ ຫັກສ່ວນຫ້ອງທີ່ວ່າງ, ລາຍຈ່າຍທີ່ບໍ່ສາມາດຮຽກເກັບຄືນໄດ້, ການເກັບຄືນບໍ່ໄດ້, ແຮງຈູງໃຈໃນການເຊົ່າ, ລາຍຈ່າຍໃນການບຳລຸງຮັກສາ, ຄ່າຕົວແທນ ແລະ ຄ່ານາຍໜ້າ ແລະ ຄ່າໃຊ້ຈ່າຍໃນການດຳເນີນງານ ແລະ ການບໍລິຫານອື່ນໆ. ລາຍຮັບສຸດທິຈາກການດຳເນີນງານແຕ່ລະໄລຍະ ພ້ອມກັບການຄາດຄະເນຂອງມູນຄ່າທີ່ຈະສິ້ນສຸດທີ່ຄາດໄວ້ ໃນເວລາສິ້ນສຸດໂຄງການ, ແມ່ນຈະຖືກໜຸດລົງ.

ມູນຄ່ຍຸດຕິທຳຂອງຊັບສິນເພື່ອການລົງທຶນຂອງບໍລິສັດແມ່ນຖືກວັດແທກໂດຍມີມູນຄ່ຢູ່ 195,659,520,000 ກີບ ນະວັນທີ 31 ທັນວາ 2021.

11. ຊັບສິນເພື່ອການລົງທຶນ (ຕໍ່)

11.2 ການວັດແທກມູນຄ່າຍຸດຕິທຳ - ຊັບສິນເພື່ອການລົງທຶນ (ຕໍ່)

ສຳລັບໄລຍະເວລາຫົກເດືອນສິ້ນສຸດ 30 ມິຖຸນາ 2022

ບໍລິສັດໄດ້ນຳໃຊ້ທີມງານພາຍໃນຂອງພວກເຂົາເພື່ອປະເມີນວ່າມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ - ອົງປະກອບທີ 1 ແລະ ຊັບສິນເພື່ອການລົງທຶນ - ອົງປະກອບທີ 2 ມາຮອດວັນທີ 30 ມິຖຸນາ 2022 ຍັງມີມູນຄ່າຄືເກົ່າເມື່ອທຽບໃສ່ມູນຄ່າຍຸດຕິທຳໃນວັນທີ 31 ທັນວາ 2021.

11.3 ລຳດັບຂັ້ນມູນຄ່າຍຸດຕິທຳ

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນການວິເຄາະມູນຄ່າຍຸດຕິທຳຂອງຊັບສິນເພື່ອການລົງທຶນ ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນສຳລັບໄລຍະຫົກເດືອນຕົ້ນປີ ໂດຍລຳດັບຂັ້ນຂອງມູນຄ່າຍຸດຕິທຳ:

	ມູນຄ່າຍຸດຕິທຳ				
	ລາຄາອ້າງອີງໃນຕະຫຼາດທີ່ມີການເຄື່ອນໄຫວ (ລຳດັບ 1)	*ຕົວປ່ຽນສຳຄັນທີ່ສາມາດສັງເກດເຫັນໄດ້ (ລຳດັບ 2)*	*ຕົວປ່ຽນສຳຄັນຕ່າງໆທີ່ບໍ່ສາມາດສັງເກດເຫັນໄດ້ (ລຳດັບ 3)*	*ລວມທັງໝົດ*	*ກຳໄລທັງໝົດພາຍໄລຍະໃນໃບລາຍງານຜົນການດຳເນີນງານ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
30 ມິຖຸນາ 2022					
ຊັບສິນເພື່ອການລົງທຶນ	-	-	195,659,520,000	195,659,520,000	-
	-	**-**	**195,659,520,000**	**195,659,520,000**	**-**
30 ມິຖຸນາ 2021					
ຊັບສິນເພື່ອການລົງທຶນ	-	-	194,125,161,160	194,125,161,160	-
	-	**-**	**194,125,161,160**	**194,125,161,160**	**-**

ບໍ່ມີການໂອນລະຫວ່າງລະດັບ 1, 2 ຫຼື 3 ໃນລະຫວ່າງໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022.

11. ຊັບສິນເພື່ອການລົງທຶນ (ຕໍ່)

11.4 ເຕັກນິກການປະເມີນມູນຄ່າທີ່ໃຊ້ເພື່ອໃຫ້ໄດ້ມູນຄ່າຍຸດຕິທຳ

ຕາຕະລາງຕໍ່ໄປນີ້ສະແດງໃຫ້ເຫັນເຕັກນິກການປະເມີນມູນຄ່າທີ່ໃຊ້ໃນການວັດແທກມູນຄ່າຍຸດຕິທຳຂອງຊັບສິນໃນການລົງທຶນ - ສ່ວນປະກອບທີ 1 ແລະ ຊັບສິນການລົງທຶນ - ສ່ວນປະກອບທີ 2, ພ້ອມທັງຂໍ້ມູນນຳເຂົ້າທີ່ມີຄວາມສຳຄັນທີ່ນຳມາໃຊ້:

ເຕັກນິກການ ປະເມີນມູນຄ່າ	*ປັດໄຈສຳຄັນໃນການປ້ອນຂໍ້ມູນທີ່ບໍ່ສາມາດຄວບຄຸມໄດ້*	*ຄວາມສຳພັນລະຫວ່າງປັດໃຈຫຼັກທີ່ບໍ່ສາມາດຄວບຄຸມໄດ້ ແລະ ການວັດແທກມູນຄ່າຍຸດຕິທຳ*
ສ່ວນຫຼຸດກະແສເງິນສົດ: ຮູບແບບການປະເມີນມູນຄ່າປັດຈຸບັນຂອງກະແສເງິນສົດສຸດທິທີ່ມາຈາກຊັບສິນໂດຍຄຳນຶງເຖິງອັດຕາການເພີ່ມລາຄາຄ່າເຊົ່າສຳຫຼັບພື້ນທີ່ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ, ອັດຕາພື້ນທີ່ຖືກເຊົ່າ, ຕົ້ນທຶນການດຳເນີນງານ ແລະ ຄ່າໃຊ້ຈ່າຍອື່ນໆ. ກະແສເງິນສົດສຸດທິທີ່ຄາດໄວ້ຈະຖືກຫຼຸດໂດຍໃຊ້ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງ. ໃນບັນດາປັດໄຈອື່ນໆ, ການຄາດຄະເນອັດຕາສ່ວນຫຼຸດຈະພິຈາລະນາຄຸນນະພາບຂອງອາຄານ ແລະ ສະຖານທີ່ຕັ້ງ, ຄຸນນະພາບສິນເຊື່ອຂອງຜູ້ເຊົ່າ ແລະ ເງື່ອນໄຂການເຊົ່າ.	▶ ອັດຕາການເພີ່ມຂຶ້ນຄ່າເຊົ່າສຳລັບຮ້ານຄ້າຂາຍຍ່ອຍ ແລະ ພື້ນທີ່ຫ້ອງການ: - ພື້ນທີ່ຮ້ານຄ້າຍ່ອຍ: 2% ຕໍ່ປີ ຈາກ 2023 ຫາ 2080 - ພື້ນທີ່ຫ້ອງການ: 2% ຕໍ່ປີຈາກ 2023 ຫາ 2080 ▶ ອັດຕາພື້ນທີ່ຖືກເຊົ່າ. - ພື້ນທີ່ຮ້ານຄ້າຍ່ອຍ: 80% - ພື້ນທີ່ຫ້ອງການ: 70% ▶ ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງແມ່ນ 9.65% (ອັດຕາທີ່ບໍ່ມີຄວາມສ່ຽງບວກກັບຄ່າປະກັນໄພຄວາມສ່ຽງ).	ມູນຄ່າຍຸດຕິທຳທີ່ຄາດຄະເນຈະເພີ່ມຂຶ້ນ/(ຫຼຸດລົງ) ຫາກ: ▶ ອັດຕາການເພີ່ມຂຶ້ນລາຄາເຊົ່າສຳລັບພື້ນທີ່ຮ້ານຄ້າຍ່ອຍ ແລະ ພື້ນທີ່ຫ້ອງການ ສູງກວ່າ (ຕ່ຳກວ່າ); ▶ ອັດຕາພື້ນທີ່ຖືກເຊົ່າ (ຕ່ຳກວ່າ); ▶ ອັດຕາສ່ວນຫຼຸດທີ່ປັບຕາມຄວາມສ່ຽງຕ່ຳກວ່າ (ສູງກວ່າ);

12. ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ສິນອື່ນໆ

ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງໄລຍະສັ້ນອື່ນໆ

	30 ມິຖຸນາ 2022 *ກີບ*	*31 ທັນວາ 2021* *ກີບ*
ໜີ້ຕ້ອງສິ່ງໃຫ້ພາກສ່ວນກ່ຽວຂ້ອງ *(ບົດອະທິບາຍເລກທີ 14)*	-	558,557,792
ໜີ້ຕ້ອງສິ່ງອາກອນກຳໄລ	391,669,380	391,669,380
ລາຍຮັບລໍຖ້າຊຳລະສະສາງຈາກຜູ້ເຊົ່າ – ໄລຍະສັ້ນ	3,335,042,024	3,202,109,289
ໜີ້ຕ້ອງສິ່ງອາກອນມູນຄ່າເພີ່ມ	654,568,971	668,899,411
ເງິນຄ້ຳປະກັນຈາກຜູ້ເຊົ່າ	2,476,972,705	1,871,720,576
ອື່ນໆ	362,940,180	149,849,563
	7,219,176,398	**6,842,806,011**

12. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ສິນອື່ນໆ (ຕໍ່)

ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ສິນໄລຍະຍາວອື່ນໆ

	30 ມິຖຸນາ 2022	*31 ທັນວາ 2021*
	ກີບ	*ກີບ*
ລາຍຮັບລໍຖ້າຊຳລະສະສາງຈາກຜູ້ເຊົ່າ - ໄລຍະຍາວ	3,321,771,799	4,429,029,065
	3,321,771,799	**4,429,029,065**

13. ທຶນຈົດທະບຽນທີ່ຖອກແລ້ວ

	30 ມິຖຸນາ 2022		*31 ທັນວາ 2021*	
	ຈຳນວນຮຸ້ນ	*ມູນຄ່າ (ກີບ)*	*ຈຳນວນຮຸ້ນ*	*ມູນຄ່າ (ກີບ)*
ການອອກຮຸ້ນ ແລະ ຈຳໜ່າຍຮຸ້ນ				
ຮຸ້ນສາມັນ	147,199,900	147,199,900,000	147,199,900	147,199,900,000

ໃນປີ 2019, ບໍລິສັດໄດ້ສຳເລັດການສະເໜີຂາຍຮຸ້ນຄັ້ງທຳອິດ ໂດຍມີຈຳນວນຮຸ້ນເພີ່ມເປັນ 51,199,900 ຮຸ້ນ ເຊິ່ງລາຄາໜ້າໃບແມ່ນຮຸ້ນລະ 1,000 ກີບຕໍ່ຮຸ້ນ ແລະ ລາຄາຂາຍຮຸ້ນລະ 1,050 ກີບຕໍ່ຮຸ້ນ. ດັ່ງນັ້ນ, ບໍລິສັດຈຶ່ງໄດ້ຮັບໃບຢັ້ງຢືນການສຳເລັດສະເໜີຂາຍຮຸ້ນຄັ້ງທຳອິດ ເລກທີ 0006/ຄຄຊ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ໃບທະບຽນວິສາຫະກິດ ເລກທີ 0833/ກທຄ ລົງວັນທີ 29 ພຶດສະພາ 2019 ເຊິ່ງອອກໂດຍ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສປປ ລາວ.

ຫຼັງຈາກການສະເໜີຂາຍຮຸ້ນຄັ້ງທຳອິດຮຸ້ນທັງໝົດຂອງບໍລິສັດລວມມີ 147,199,900 ຮຸ້ນ (ພາຍໃຕ້ຊື່ "VCL") ໄດ້ມີການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວຕັ້ງແຕ່ວັນທີ 31 ພຶດສະພາ 2019.

14. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງພາຍໃນໄລຍະມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ຄວາມສຳພັນ*	*ປະເທດທີ່ດຳເນີນກິດຈະການ*
ບໍລິສັດ ຜັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງ ຈັນຕອນເໜືອ ຈຳກັດ	ຜູ້ຖືຮຸ້ນ	ສປປ ລາວ

14. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນລາຄາທີ່ຕົກລົງກັນຕາມສັນຍາ. ບັນດາລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022*	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021*
		ກີບ	*ກີບ*
ບໍລິສັດ ພັດທະນາສູນເສດຖະກິດການຄ້າ ຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ການເກັບຄ່າເຊົ່າ ແລະ ອື່ນໆໃນນາມຂອງບໍລິສັດ	313,282,711	16,886,250
	ລາຍຈ່າຍດອກເບ້ຍ	-	(1,130,313,576)
	ການຊຳລະໃນນາມບໍລິສັດ	(20,020,610)	(28,219,000)
	ຄ່າບໍລິຫານສ່ວນກາງ	(981,452,586)	-
	ການເກັບຄ່າບຳລຸງຮັກສາໃນນາມຂອງ NNCD	(78,162,481)	(304,904,525)

ຂໍ້ກຳນົດ ແລະ ເງື່ອນໄຂ

ຍອດເຫຼືອທີ່ຍັງຄ້າງຢູ່ ນະວັນທີ 30 ມິຖຸນາ 2022 ແມ່ນບໍ່ມີຫຼັກຊັບຄ້ຳປະກັນ ແລະ ຈະຖືກຊຳລະເປັນເງິນສົດ. ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2022, ບໍລິສັດບໍ່ໄດ້ຫັກເງິນແຮສຳລັບໜີ້ເສຍທີ່ກ່ຽວຂ້ອງກັບຈຳນວນເງິນຂອງພາກສ່ວນທີ່ກ່ຽວຂ້ອງ (31 ທັນວາ 2021: ສູນ)

ການຊື້ ແລະ ດອກເບ້ຍຈາກພາກສ່ວນທີ່ກ່ຽວຂ້ອງແມ່ນເຮັດບົນພື້ນຖານການເຈລະຈາສັນຍາ.

ຍອດເຫຼືອໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2022 ແລະ 31 ທັນວາ 2021 ມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ລັກສະນະຂອງທຸລະກຳ*	*30 ມິຖຸນາ 2022*	*31 ທັນວາ 2021*
		ກີບ	*ກີບ*
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ *(ບົດອະທິບາຍເລກທີ 12)*			
ບໍລິສັດ ພັດທະນາສູນເສດຖະກິດການຄ້າ ຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ໜີ້ຕ້ອງສົ່ງສຸດທິ	-	558,557,792
		-	**558,557,792**
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ *(ບົດອະທິບາຍເລກທີ 10)*			
ບໍລິສັດ ພັດທະນາສູນເສດຖະກິດການຄ້າ ຄົບວົງຈອນໝອງຈັນຕອນເໜືອ ຈຳກັດ	ໜີ້ຕ້ອງຮັບສຸດທິ	263,331,757	-
		263,331,757	-

15. ການບໍລິຫານທຶນ

ທຶນຂອງບໍລິສັດປະກອບດ້ວຍທຶນ, ເງິນກູ້, ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ.

ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອຮັບປະກັນວ່າ ບໍລິສັດຮັກສາອັດຕາສ່ວນທຶນ ຢູ່ໃນສະພາບທີ່ດີ ເພື່ອສະໜັບສະໜຸນທຸລະກິດຂອງຕົນ ແລະ ເພີ່ມມູນຄ່າຂອງຜູ້ຖືຮຸ້ນ.

ບໍລິສັດບໍລິຫານໂຄງສ້າງທຶນຂອງຕົນ ແລະ ປັບປຸງແກ້ໄຂຕໍ່ໂຄງສ້າງດັ່ງກ່າວ ໃນດ້ານຂອງການປ່ຽນແປງເງື່ອນໄຂເສດຖະກິດ. ເພື່ອຮັກສາ ຫຼື ປັບໂຄງສ້າງທຶນ, ບໍລິສັດອາດຈະປັບປຸງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ຄືນທຶນໃຫ້ຜູ້ຖືຮຸ້ນ ຫຼື ເພີ່ມຮຸ້ນທຶນ.

ບໍລິສັດໄດ້ຕິດຕາມທຶນ ໂດຍນຳໃຊ້ອັດຕາສ່ວນໜີ້ສິນຕໍ່ທຶນ ເຊິ່ງເທົ່າກັບໜີ້ສິນສຸດທິຫານໃຫ້ທຶນທັງໝົດບວກກັບໜີ້ສິນສຸດທິ.

	30 ມິຖຸນາ 2022 *ກີບ*	*31 ທັນວາ 2021* *ກີບ*
ໜີ້ສິນທັງໝົດ	10,540,948,197	11,271,835,076
ຫັກ: ເງິນສົດ	(4,201,712,304)	(3,384,656,995)
ໜີ້ສິນສຸດທິ	**6,339,235,893**	**7,887,178,081**
ທຶນ	182,672,900,068	181,293,565,545
ທຶນ ແລະ ໜີ້ສິນສຸດທິ	**189,012,135,961**	**189,180,743,626**
ອັດຕາສ່ວນໜີ້ສິນຕໍ່ທຶນ	3%	4%

ຄວາມເໝາະສົມຂອງອັດຕາສ່ວນໜີ້ສິນຕໍ່ທຶນແມ່ນໄດ້ທົບທວນຄືນ ແລະ ກຳນົດໂດຍຄະນະບໍລິຫານໃນແຕ່ລະປີ.

16. ພາລະຜູກພັນ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳໃນອະນາຄົດ ນະວັນທີ 30 ມິຖຸນາ 2022 ແລະ 31 ທັນວາ 2021 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	30 ມິຖຸນາ 2022 *ກີບ*	*31 ທັນວາ 2021* *ກີບ*
ຕ່ຳກວ່າ 1 ປີ	4,773,036,366	2,406,300,134
ແຕ່ 1 - 5 ປີ	2,308,327,677	2,085,396,962
ຫຼາຍກວ່າ 5 ປີ	-	-
ລວມທັງໝົດ	**7,081,364,043**	**4,491,697,096**

ພາລະຜູກພັນພາຍໃຕ້ BCC

ອີງຕາມສັນຍາການຮ່ວມມືລະຫວ່າງບໍລິສັດ ແລະ ບໍລິສັດ ເມເຈີ ແຜ່ດທີນ ຊິເນເຜັກ (ລາວ) ຈຳກັດ (ເມເຈີ), ບໍລິສັດໄດ້ນຳໃຊ້ຊັບສິນເພື່ອການລົງທຶນຂອງຕົນໂດຍການໃຫ້ເຊົ່າເປັນໄລຍະເວລາ 20 ປີ ເລີ່ມຕົ້ງແຕ່ວັນທີ 7 ສິງຫາ 2015 ຫາ ວັນທີ 6 ສິງຫາ 2035 ເພື່ອຮ່ວມກັນດຳເນີນທຸລະກິດໂຮງໜັງກັບເມເຈີ. ລາຍຮັບຈາກການດຳເນີນງານດັ່ງກ່າວແມ່ນໄດ້ຖືກແບ່ງສ່ວນລະຫວ່າງ ບໍລິສັດ ແລະ ເມເຈີ ໃນອັດຕາຄົງທີ່ ເຊິ່ງໄດ້ກຳນົດໄວ້ໃນສັນຍາ. ດັ່ງນັ້ນ, ເມເຈີ ຈະຕ້ອງໄດ້ຈ່າຍເງິນໃຫ້ກັບບໍລິສັດ ດັ່ງຕໍ່ໄປນີ້:

16. ພາລະຜູກພັນ (ຕໍ່)

- ພື້ນທີ່ A:
  - (i) ແບ່ງສ່ວນລາຍຮັບພື້ນທີ່ການດຳເນີນງານຫຼັກ ແລະ,
  - (ii) ແບ່ງສ່ວນລາຍຮັບຂອງການສຳປະທານ.
- ພື້ນທີ່ B:
  - (i) ແບ່ງສ່ວນລາຍຮັບຂອງໂບລິ່ງ ລວມເຖິງການເຊົ່າ ຫຼື ຂາຍອຸປະກອນທີ່ກ່ຽວຂ້ອງ,
  - (ii) ແບ່ງສ່ວນລາຍຮັບຂອງຍອດຂາຍອາຫານ ແລະ ເຄື່ອງດື່ມ ຈາກສະຖານທີ່ຫຼິ້ນໂບລິ່ງ ແລະ ພື້ນທີ່ຄາຣາໂອ ເກາະທີ່ເມເຈີອາດຈະດຳເນີນງານ.
- ອື່ນໆ: ຄ່າທຳນຽມຄົງທີ່ປະຈຳເດືອນ.

ບໍລິສັດບໍ່ມີສິດຍົກເລີກ BCC ກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍ ເມເຈີ; (ii) ມີເຫດສຸດວິໄສ; (iii) ຝ່າຍໃດຝ່າຍໜຶ່ງຢື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

17. ຂໍ້ມູນຈຳແນກຕາມສ່ວນງານ

ຕາມການເປີດເຜີຍໃນບົດອະທິບາຍເລກທີ 3.18, ຄະນະບໍລິຫານຂອງບໍລິສັດເຫັນວ່າມີພຽງງານຂອງທຸລະກິດ ແລະ ພູມສາດ ເທົ່ານັ້ນ ຈຶ່ງບໍ່ຈຳເປັນທີ່ຈະນຳສະເໜີຂໍ້ມູນຈຳແນກຕາມສ່ວນງານ.

18. ກຳໄລຕໍ່ຮຸ້ນ

ລາຍການຕໍ່ໄປນີ້ສະແດງໃຫ້ເຫັນເຖິງລາຍໄດ້ ແລະ ຂໍ້ມູນຮຸ້ນທີ່ໃຊ້ເປັນພື້ນຖານຂອງການຄິດໄລ່ກຳໄລຕໍ່ຮຸ້ນ:

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2022 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2021 ກີບ*
ກຳໄລສຸດທິຈາກຜູ້ຖືຮຸ້ນສາມັນເປັນເງິນກີບ	2,851,333,523	3,576,248,171
ຈຳນວນສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ (*)	147,199,900	147,199,900
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ	**19.37**	**24.30**

19. ເຫດການພາຍຫຼັງວັນທີອອກບົດລາຍງານ

ບໍ່ມີບັນຫາອື່ນ ຫຼື ເຫດການອື່ນໆທີ່ເກີດຂຶ້ນພາຍຫຼັງວັນທີ 30 ມິຖຸນາ 2022 ທີ່ຮຽກຮ້ອງໃຫ້ມີການປັບປຸງ ຫຼື ເປີດເຜີຍໃນເອກະສານລາຍງານການເງິນໄລຍະຫົກເດືອນຕົ້ນປີຂອງບໍລິສັດ.

ກະກຽມໂດຍ:

ທ່ານ ໂຫຼວ ສ່ຽວຕິງ
ຜູ້ອຳນວຍການຝ່າຍການເງິນ

ອະນຸມັດໂດຍ:

ທ່ານ ຫວັ່ງ ເຫວີ່ຍຄຸນ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

26 ສິງຫາ 2022